**ຄະນະຜູ້ຈັດທຳ ຄຳແນະນຳສຳລັບຄຣູສອນ**

**Copyright © 2017 by BAPTISTWAY PRESS®.**
**ສງວນລິກຂະສິດ**

ອະນຸຍາດໃຫ້ຄຣິສຕະຈັກເຮັດກ໊ອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ. ຫ້າມຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ. ຖ້າຢາກຊາບລາຍລະອຽດເພີ້ມເຕີມກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas, 7557 Rambler Road, Suite 1200, Dallas, TX 75231-2388.

BAPTISTWAY PRESS® is registered in U.S. Patent and Trademark Office.

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ໄດ້ຄັດມາຈາກປຶ້ມພຣະຄັມພີທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະວັນທີຈົດທະບຽນສງວນລິກຂະສິດຂອງປຶ້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ: ເດືອນ ມີນາ 2004

BAPTISTWAY PRESS® Leadership Team

Executive Director, Baptist General Convention of Texas: David Hardage
Director, Great Commission Team: Delvin Atchison
Publisher BAPTISTWAY PRESS®: Scott Stevens

Language Materials Team

Teaching Procedures Writer for Lesson 1, 2, 3
Bounhome Phommachanh, Lao-Thai Baptist, San Antonio, Texas
Editor for Lessons 1, 2, 3,
Phaisane Somsith, Homprakhoon Baptist Church, Dallas, Texas

Teaching Procedures Writer for Lesson 4, 5, 6
Bounchanh Vongsurith, Lao Congregation of First Baptist Church, Amarillo, TX
Editor for Lessons 4, 5, 6
Phaisane Somsith, Homprakhoon Baptist Church, Dallas, Texas

Teaching Procedures Writer for Lesson 7, 8, 9
Sidney Kahn, Saginaw Community Church, Fort Worth, Texas
Editor for Lessons 7, 8, 9
Phaisane Somsith, Homprakhoon Baptist Church, Dallas, Texas

Teaching Procedures Writer for Lesson 10, 11, 12, 13
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Lessons 10, 11, 12, 13
Phaisane Somsith, Homprakhoon Baptist Church, Dallas, Texas

Facilitator for the LAOTIAN TEAM: Joe Haag

Patty Lane, Director, Office of Intercultural Initiatives, Baptist General Convention of Texas

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 1
# ຮັບຜິດຊອບຕໍ່ການຮຽກເອີ້ນຂອງພຣະເຈົ້າ

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້</u>**: 1 ຊາມູເອນ ບົດທີ 3

**<u>ພູມຫລັງຂອງພຣະຄັມພີ</u>**: 1 ຊາມູເອນ ບົດທີ 1 ເຖິງ ບົດທີ 3

**<u>ຈຸດສຳຄັນສຳລັບບົດຮຽນນີ້:</u>** ຊາມູເອນມີຄວາມຮັບຜິດຊອບຕໍ່ການຮຽກເອີ້ນຂອງພຣະເຈົ້າ ດ້ວຍຈິດໃຈອັນເປີດກວ້າງແລະດ້ວຍຈິດໃຈທີ່ເຊື່ອຟັງ.

**<u>ຄຳຖາມເພື່ອການຄົ້ນຄວ້າ</u>**: ເມື່ອພວກເຮົາຫາກມີການຮຽກເອີ້ນໃຫ້ຮັບໃຊ້ ພວກເຮົາຈະມີຄວາມຮັບຜິດຊອບຢ່າງໃດ?

**<u>ຈຸດປະສົງຂອງບົດຮຽນນີ້</u>**: ເພື່ອຈະສະແດງເຖິງການຮຽກເອີ້ນໃຫ້ຮັບໃຊ້ ດ້ວຍຈິດໃຈອັນເປີດກວ້າງ ແລະດ້ວຍຈິດໃຈທີ່ເຊື່ອຟັງ.

## <u>ແຜນການສິດສອນສຳລັບຄຣູ</u>

### <u>ນຳເຣື່ອງເຂົ້າສູ່ຊີວິດຈິງ(ໃຊ້ເວລາ 5 ນາທີ</u>

1. ກ່ອນຈະເລີ້ມຫ້ອງຮຽນ ໃຫ້ຕຽມເຈັ້ຽແຜ່ນໃຫຍ່ແດ່ຕິດຢູ່ຝາ. ຂະນະທີ່ນັກຮຽນກຳລັງມາ ໃຫ້ຢາຍມາກເກີໃຫ້ແຕ່ລະຄົນ. ຫລືວ່າຖ້ານັກຮຽນເຂົ້າມານັ່ງໃນຫ້ອງຮຽນແລ້ວ ຄຣູຈະຖາມນັກຮຽນວ່າແມ່ນຜູ້ໃດໃນພຣະຄັມພີທີ່ທ່ານເຫັນວ່າຈະເປັນຕົວຢ່າງໃຫ້ແກ່ທ່ານໄດ້? ຈະເປັນຄົນນຶ່ງຫລືຫລາຍຄົນກໍໄດ້. ຂຽນລົງໃນແຜ່ນເຈັ້ຽ.....
   ຖ້າໝົດທຸກຄົນແລ້ວ ຄຣູຈະມາທວນຄືນໃນລາຍຊື່ນັ້ນ. ຖ້າມີສອງຊື່ໃຫ້ລົບອອກ ເອົາໄວ້ຊື່ດຽວ. ແລ້ວກໍໃຫ້ບອກນັກຮຽນວ່າ ວັນນີ້ພວກເຮົາຈະສຶກສາເຣື່ອງຂອງຊາຍໜຸ່ມຄົນນຶ່ງທີ່ພຣະເຈົ້າຊົງເອີ້ນໃຊ້ໃຫ້ເປັນຜູ້ເຜີຍພຣະຄຳຂອງພຣະເຈົ້າ.

### <u>ນຳພາການສຶກສາພຣະຄັມພີ (ໃຊ້ເວລາ 30 ນາທີ)</u>

2. ຄຣູຈະຈັດຕຽມໂຄງຮ່າງຂອງບົດຮຽນ ຄືຂຽນໃສ່ເຈັ້ຽໄວ້ແລ້ວ ຫລືຈະຂຽນໃນກະດານກໍໄດ້ ເພື່ອເຮົາຈະໄດ້ຕິດຕາມບາດກ້າວຂອງບົດຮຽນໃນເວລາຕ້ອງການ.
   - ວັນແຫ່ງຄວາມມືດ (1 ຊາມູເອນ 3:1)
   - ພຣະຄຳຂອງພຣະເຈົ້າ (1 ຊາມູເອນ 3:2-9)
   - ການຮັບຜິດຊອບຕໍ່ການຮຽກເອີ້ນ (1 ຊາມູເອນ 3:10-21)

3. ໃຫ້ຄຣູເລົ່າເຣື່ອງ ພຣະທັມ 1 ຊາມູເອນ ບົດທີ 1 ແລະ 2 ພໍຄ້າວໆ ພໍໃຫ້ນັກຮຽນຮູ້ຄວາມເປັນມາ, ພຣະວິນຍານບໍຣິສຸດຂອງພຣະເຈົ້າຍັງຢູ່ໃນປະວັດສາດຂອງອິສຣາເອນຕລອດມາ. ເປັນຫຍັງພຣະເຈົ້າຈຶ່ງບໍ່ກ່າວຜ່ານເອລີ?

4. ໃຫ້ນັກຮຽນຄົນນຶ່ງອ່ານພຣະທັມ 1 ຊາມູເອນ 3:1-10 ແລ້ວຄຣູຈະເປັນຜູ້ເນັ້ນໜັກ. ໂດຍຂ້ານ້ອຍ, ຜູ້ຮັບໃຊ້ຂອງພຣະອົງຄອຍຟັງຢູ່. ຖາມນັກຮຽນ: ທ່ານມີຄວາມຮູ້ສຶກບໍ່ວ່າພຣະເຈົ້າຊົງຕ້ອງການທ່ານເວລາໃດ? ສົນທະນາ

5. ອ່ານ ພຣະທັມ 1 ຊາມູເອນ 3:11-14 ຄຣູຈະອະທິບາຍເຖິງຄວາມຊອບທັມໃນການຮັບໃຊ້ວຽກງານຂອງພຣະເຈົ້າ.

6. ອ່ານພຣະທັມຂໍ້ຕໍ່ໄປ 1 ຊາມູເອນ 3:15-18 ຊາມູເອນ ກ່າວພຣະຄໍາຂອງພຣະເຈົ້າຕໍ່ເອລີ. ຖາມທ່ານຄິດຢ່າງໃດທີ່ຊາມູເອນກ່າວຄໍານີ້ຕໍ່ເອລີ? ແລະເອລີມີຄວາມຮັບຜິດຊອບຢ່າງໃດ?

## <u>ນໍາບົດຮຽນໄປໃຊ້ໃນຊີວິດ</u>

7. ອ່ານພຣະທັມ 1 ຊາມູເອນ 3:19-21 ນີ້ຄືການເລີ້ມຕົ້ນໃນການຕອບຮັບຄໍາຮຽກເອີ້ນຂອງພຣະເຈົ້າ. ຊາມູເອນເປັນຜູ້ຮັບໃຊ້ໃນການເປັນຕົວຢ່າງທີ່ດີ. ທ່ານບໍ່ຢ້ານແລະບໍ່ອາຍໃນການຮັບຜິດຊອບໃນພຣະຄໍາຂອງພຣະເຈົ້າ. ທ່ານເຊື່ອວ່າພຣະເຈົ້າຊົງເຈີນທ່ານ. ທ່ານເປັນຜູ້ທີ່ມີຄ່າຫລາຍໃນສາຍພຣະເນດຂອງພຣະເຈົ້າ. ພຣະເຈົ້າຊົງສໍາແດງຖ້ອຍຄໍາຂອງພຣະອົງຜ່ານຊາມູເອນມາເຖິງຊົນຊາດ ອິສຣາເອນ. ປະຊາຊົນທັງຫລາຍກໍຮັກຫອມແລະເຊື່ອຟັງທ່ານ.

8. ທັນມາຫາເຈັ້ງບົດຮຽນ ໃບທໍາອິດທີ່ຫົວເຣື່ອງບອກວ່າ ຈຸດປະສົງຂອງບົດຮຽນນີ້ ແລ້ວຄຣູກໍສາມາດ
9. ສລຸບບົດຮຽນສໍາລັບວັນນີ້

10. ຖາມນັກຮຽນໃນເຈັ້ງບົດຮຽນ ຫລືອາດຈະໃຊ້ເປັນການສົນທະນາກໍໄດ້. ໜູນໃຈນັກຮຽນ ຖ້າຜູ້ໃດຫາກຮູ້ສຶກວ່າພຣະເຈົ້າຊົງຮຽນເອີ້ນ ກໍຂໍໃຫ້ຮັບຜິດຊອບຕໍ່ການຮຽກເອີ້ນນັ້ນ.

11. ນໍາພາອ້ອນວອນອະທິຖານ ຕຽມຕົວເຂົ້າຮັບຟັງຄໍາຕັສສັ່ງຂອງພຣະເຈົ້າ.

*ບພ*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 2
# ຮັບໃຊ້: ດ້ວຍຄວາມເມດຕາກະຣຸນາ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້**: 2 ຊາມູເອນ ບົດທີ 9

**ພູມຫລັງຂອງພຣະຄັມພີ**: 1 ຊາມູເອນ ບົດທີ 20 ; 2 ຊາມູເອນ ບົດທີ 9

**ຈຸດສຳຄັນສຳລັບບົດຮຽນນີ້:** ການສະແດງອອກໃນການຮັບໃຊ້ດ້ວຍຄວາມເມດຕາກະຣຸນາ ໂດຍບໍ່ມີເງື່ອນໄຂ, ແມ່ນເສັ້ນທາງແຫ່ງການຮັບໃຊ້ພຣະເຈົ້າທີ່ແທ້ຈິງ

**ຄຳຖາມເພື່ອການຄົ້ນຄວ້າ**: ມີຈັກຄັ້ງທີ່ພວກເຮົາຫາໂອກາດເພື່ອຈະຊ່ວຍເຫລືອຄົນອື່ນດ້ວຍຄວາມເມດຕາກະຣຸນາ?

**ຈຸດປະສົງຂອງບົດຮຽນນີ້**:ເພື່ອໃຫ້ພວກເຮົາຕັ້ງໃຈໃນການທີ່ຈະຫາໂອກາດຊ່ວຍເຫລືອຜູ້ອື່ນດ້ວຍຄວາມເມດຕາກະຣຸນາຢ່າງແທ້ຈິງ.

## ແຜນການສິດສອນ

## ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ກ່ອນຈະເລີ້ມເຂົ້າບົດຮຽນ ໃຫ້ຕິດເຈັ້ງໃບໃຫຍ່ໃສ່ຝາຫ້ອງ ເວລານັກຮຽນມາເຖິງຫ້ອງຮຽນ ຄຣູຈະຖາມນັກຮຽນວ່າ ໃນອາທິດທີ່ຜ່ານມາ ຫລືວ່າໃນເດືອນທີ່ຜ່ານມາ ທ່ານໄດ້ເຮັດອັນໃດແດ່ ເພື່ອຄວາມເມດຕາກະຣຸນາ. ຫລັງຈາກນັ້ນກໍໃຫ້ນັກຮຽນ ອະທິບາຍໃນສິ່ງທີ່ໄດ້ກະທຳມາ.
   ໃນວັນນີ້ ພວກເຮົາຈະໄດ້ສຶກສານຳກັນ ກ່ຽວກັບເຣື່ອງການຮັບໃຊ້ດ້ວຍຄວາມເມດຕາກະຣຸນາ

## ນຳພາການສິດສອນພຣະຄັມພີ (ໃຊ້ເວລາ 30 ນາທີ)

2. ຄຣູຈະເລີ້ມຕົ້ນດ້ວຍການ ໃຫ້ຄົນນຶ່ງອ່ານພຣະທັມ 1 ຊາມູເອນ ບົດທີ 20. ເພື່ອທຸກຄົນຈະໄດ້ເຂົ້າໃຈໃນຄວາມເປັນມາ. ຫລືຖ້າຜູ້ໃດຜູ້ນຶ່ງຫາກເວົ້າພໍຫຍໍ້ໆໄດ້ ກໍໃຫ້ຄົນນັ້ນເວົ້າ ເພື່ອທີ່ຈະນຳໄປຫາ 2 ຊາມູເອນ ບົດທີ 9.

3. ໃຫ້ຄົນນຶ່ງອ່ານດັງໆ 2 ຊາມູເອນ 9:1-5. ໃຊ້ການແນະນຳຈາກເຈັ້ງບົດຮຽນ ຄຣູຈະໃຊ້ການບັລຍາຍນ້ອຍໆນຶ່ງກໍໄດ້ໃນຕອນນີ້. ໃນຣາຊການຂອງກະສັດດາວິດຂຶ້ນຄອງຣາດໃໝ່ໆ, ຕາມທັມດາແລ້ວກະສັດຈະກວດລ້າງຫລືກຳຈັດສັດຕຣູໃຫ້ໝົດສິ້ນ, ບາງທີກໍລ້າງໝົດຄອບຄົວ ບາງທີກໍລ້າງໝົດໂຄດ.

4. ແຕ່ວ່າກະສັດດາວິດ ຊໍ້າພັດເປັນກະສັດທີ່ມີຄວາມເມດຕາກະຣຸນາ. ເພິ່ນໄດ້ເອີ້ນຊີບາມາຖາມວ່າ ຍັງມີໃຜອີກແດ່ບໍ່ທີ່ເປັນເຊື້ອສາຍຂອງຊາອູນ? ຖາມ: ທ່ານຄິດວ່າ ຊີບາຈະຄິດຢ່າງໃດ? ແຕ່ວ່າ ເພິ່ນກໍກ່າວຕໍ່ໄປວ່າ ເຮົາຈະໄດ້ສຳແດງຄວາມເມດຕາກະຣຸນາຂອງພຣະເຈົ້າຕໍ່ເຂົາ.

5. ໜູນໃຈນັກຮຽນໃຫ້ອາດພາບດ້ວຍກັນວ່າ ຖ້າເປັນພວກເຮົາເດ ພວກເຮົາຈະຄິດຢ່າງໃດ? ບາງຄັ້ງ ພວກເຮົາອາດຄິດວ່າ ກະສັດດາວິດຈະລໍ້ໃຫ້ເອົາເຊື້ອສາຍຂອງຊາອູນອອກມາ ເພາະຕົວຂອງຊາອູນເອງກໍມີເຈຕນາຈະຂ້າດາວິດຢູ່ແລ້ວ.

6. ອ່ານພຣະຄັມພີອິກຄັ້ງນຶ່ງ 2 ຊາມູເອນ 9: 6-13 ຄຣູຈະອ່ານເອງ ໃຫ້ນັກຮຽນວາດພາບເພື່ອຈະໄດ້ຕິດຕາມຢ່າງຖີ່ຖ້ວນ. ຫລັງຈາກອ່ານສຸດແລ້ວຄຣູຈະຖາມນັກຮຽນວ່າ: ແມ່ນຫຍັງຄືເປັນຢ່າງນີ້? ທ່ານວາດພາບເຫັນເມຊີໂບເຟດເປັນຢ່າງໃດ? ແລະທ່ານກໍເຫັນກະສັດດາວິດເປັນຄົນຢ່າງໃດ? ທ່ານມີຄວາມຮູ້ສຶກຢ່າງໃດໃນເຫດການນີ້? ທ່ານຄິດວ່າທ່າທີຂອງດາວິດຈະປ່ຽນແປງຕໍ່ຊີບາແລະພີ່ນ້ອງຂອງລາວບໍ່? ທ່ານຄິດຢ່າງໃດໃນການກະທຳຂອງດາວິດ? ເປັນການກະຕຸ້ນອັນໃດແດ່ແກ່ຜູ້ຮັບໃຊ້ຂອງພວກເຮົາທັງຫລາຍ?

7. ການກະທຳຂອງກະສັດດາວິດເປັນການແປກປລາດ ແລະກໍເປັນສິ່ງທີ່ພວກເຮົາຄວນຈະຈົດຈຳເອົາໄວ້, ຄວາມເມດຕາກະຣຸນາ ຂອງພວກເຮົາບໍ່ຄວນຈະມີສິ່ງໃດສິ່ງນຶ່ງແອບແຝງຫລືເຈືອປົນໄປດ້ວຍຢາພິດ. ເຖິງແມ່ນວ່າຈະນ້ອຍພຽງໃດກໍຕາມ ຂໍໃຫ້ເປັນຄວາມເມດຕາທີ່ແທ້ຈິງຫລືວ່າຕ້ອງເຮັດດ້ວຍຄວາມເຕັມໃຈ.

## <u>ນຳບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

8. ໃຫ້ພວກເຮົາຄິດໄປເຖິງສັງຄົມລາວທີ່ພວກເຮົາດຳລົງຊີວິດຢູ່ໃນປັດຈຸບັນນີ້ ທີ່ຢູ່ຂ້າງໆກັບຄຣິສຕະຈັກຂອງພວກເຮົາ. ເປີດໂອກາດໃຫ້ເຂົາເຈົ້າສົນທະນາກັນວ່າເປັນຢ່າງໃດ ໃນໂບດຂອງພວກເຮົາເດມີຄວາມເມດຕາກະຣຸນາກັນບໍ່? ອະທິບາຍ ຄຳວ່າຄວາມເມດຕາ ແມ່ນຫຍັງ?

9. ພວກເຮົາຈະເຮັດໄດ້ບໍ່? ແນ່ນອນພວກເຮົາຕ້ອງເຮັດໄດ້.

10. ຕຽມຕົວເຂົ້ານະມັສການ, ກ່ອນຈະອອກໄປ ຂໍເຊີນຮ່ວມກັນອ້ອນວອນອະທິຖານ ເພື່ອທຸກຄົນຈະໄດ້ຕຽມພ້ອມ.

*ບພ*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 3
# ຮັບໃຊ້:ດ້ວຍການຕອບສນອງຄວາມຈຳເປັນ

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້</u>**: 2 ປວັດກະສັດ 4:8-20, 27-37

**<u>ພູມຫລັງຂອງພຣະຄັມພີ</u>**: 2 ປວັດກະສັດ 4:8-37

**<u>ຈຸດສຳຄັນສຳລັບບົດຮຽນນີ້:</u>** ການຮູ້ຈັກຂອບພຣະຄຸນແມ່ນການເລີ້ມຕົ້ນໃນການຮັບໃຊ້ທີ່ດີ

**<u>ຄຳຖາມ ເພື່ອການຄົ້ນຄວ້າ</u>**: ພວກເຮົາຈະສະແດງການຮູ້ບຸນຄຸນຕໍ່ຜູ້ອື່ນຢ່າງໃດໃນການຮັບໃຊ້ທີ່ດີ

**<u>ຈຸດປະສົງຂອງບົດຮຽນນີ້</u>**: ເພື່ອຈະເຮັດໃຫ້ຄົນອື່ນຮູ້ວ່າ ເຮົາໄດ້ສະແດງອອກໃນການຮູ້ບຸນຄຸນຕໍ່ຜູ້ອື່ນໃນການຮັບໃຊ້.

## <u>ແຜນສຳລັບການສິດສອນ</u>

## <u>ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)</u>

1. ກ່ອນເລີ້ມຕົ້ນການຮຽນພຣະຄັມພີໃນວັນນີ້: ຖາມນັກຮຽນວ່າ ໃນພຣະຄັມພີມີຄຸນລັກສະນະໃນການຮັບໃຊ້ຜູ້ອື່ນຢ່າງໃດ? ມີຜູ້ໃດ ຮັບໃຊ້ຜູ້ໃດ (ຕົວຢ່າງ: ດາວິດຮັບໃຊ້ ກະສັດຊາອູນ, ຕີໂມທຽວຮັບໃຊ້ໂປໂລ, ພຣະເຢຊູຮັບໃຊ້ພວກສາວົກ, ໂຢເຊບຮັບໃຊ້ໂປຕີຟາ, ຮັບໃຊ້ຟາຣາໂອ ແລະຕໍ່ໄປ...) ໃນຊີວິດທີ່ຜ່ານມາ, ພວກເຮົາອາດຈະບໍ່ຮູ້ວ່າ ຍິງຊາວຊູເນມຄົນນີ້ເປັນຜູ້ຮັບໃຊ້ເອລີຊາ ແລະເອລີຊາກໍຮັບໃຊ້ລາວຄືນ.

2. ວັນນີ້ ພວກເຮົາຈະສຶກສານຳກັນ ກ່ຽວກັບການຕອບສນອງການຮັບໃຊ້ຜູ້ອື່ນ

## <u>ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)</u>

3. ໃຫ້ນັກຮຽນຄົນນຶ່ງທີ່ທີຄວາມສມັກໃຈເວົ້າເຣື່ອງຫຍໍ້ຂອງການຮັບໃຊ້ ຈະເປັນໃຜກໍໄດ້ທີ່ເປັນຜູ້ປະກາດພຣະທັມ. ແລ້ວປະຊາຊົນຜູ້ທີ່ໄປຮັບພຣະຄຳຂອງພຣະເຈົ້າໂດຍຜ່ານທ່ານ ເຂົາເຫລົ່ານັ້ນປະຕິບັດຕໍ່ທ່ານຢ່າງໃດ?

4. ໃຫ້ຄົນນຶ່ງອ່ານພຣະທັມ 2 ປວັດກະສັດ 4:8-10 ຄຣູຈະອະທິບາຍວ່າ ເປັນຫຍັງຍິງຊາວຊູເນມຄົນນີ້ຈຶ່ງເຊື່ອເອລີຊາ ຈົນໄດ້ສ້າງຫ້ອງພິເສດໃຫ້ແກ່ເພິ່ນ. ທ່ານຜູ້ປະກາດເອລີຊາຈະມີຄວາມຄິດຢ່າງໃດຕໍ່ການກະທຳຂອງນາງ.

5. ອ່ານ 2 ປວັດກະສັດ 4:11-20 ໃຊ້ຄຳຊີ້ແຈງໃນເຈັ້ງບົດຮຽນ ເອລີຊາໄດ້ຕອບສນອງນາງຢ່າງໃດແດ່. ເປັນຫຍັງນາງຈຶ່ງບໍ່ຍອມຮັບ? ເພາະລູກຊາຍຂອງນາງເປັນສິ່ງທີ່ຈຳເປັນທີ່ສຸດ. ຖາມ: ເປັນຫຍັງຍິງຊາວຊູເນມຄົນນີ້ຈຶ່ງມີທ່າທີແຂງກ້າວ່າຈະບໍ່ມີລູກ. ລູກຊາຍຂອງນາງຕາຍຈິງບໍ່ ຫລືວ່າເພື່ອເປັນການອັສຈັນ?

6. ຂໍ້ຄວາມເຫລົ່ານີ້ຕ້ອງຂຽນໄວ້ກ່ອນເມື່ອເຖິງເວລາແລ້ວກໍໃຫ້ເອົາອອກມາຕິດໃສ່ຝາ.

- ຍິງຄົນນີ້ແລ່ນໄປກອດຕີນຂອງທ່ານເອລີຊາ
- ເອລີຊາຖາມຍິງນັ້ນວ່າ ເປັນຫຍັງເຈົ້າຄືໂສກເສົ້າແທ້
- ລາວຕອບເອລີຊາເຖິງສິ່ງທີ່ເກີດຂຶ້ນແກ່ລູກຂອງລາວ
- ເອລີຊາສັ່ງໃຫ້ເກຫະຊີອອກໄປພ້ອມດ້ວຍໄມ້ເທົ້າ ໃຫ້ຂັ້ນຕອນການກະທຳທຸກຢ່າງ
- ເອລີຊາກໍມາເຖິງເຮືອນຂອງນາງ ເດັກນ້ອຍຍັງຕາຍຢູ່
- ເອລີຊາກໍເຂົ້າໄປຫາເດັກ ປິດປະຕູ ແລ້ວກໍນອນທາບຮ່າງກາຍຂອງເດັກ
- ຮ່າງກາຍຂອງເດັກກໍມີຄວາມອຸ່ນຂຶ້ນມາ
- ເອລີຊາກໍຍ່າງໄປມາຢູ່ໃນຫ້ອງຂອງເດັກແລ້ວກໍນອນທາບເດັກອີກ
- ເດັກກໍມີອາການຈາມເຈັດຄັ້ງ ແລ້ວກໍມືນຕາ

ໃຫ້ອີກຄົນນຶ່ງອ່ານ 2 ປວັດກະສັດ 4:27-37 ຢາຍເຈັ້ງໃຫ້ນັກຮຽນ. ຂຽນຕາມລຳດັບ ແລ້ວໃຫ້ເອົາມາຕິດໃສ່ຝາຕາມລຳດັບ.
ຖາມ: ທ່ານຄິດບໍວ່າ ຍິງຄົນນີ້ຈະໄປຫາເອລີຊາບໍ? ຖ້າລາວຫາກບໍ່ໄດ້ຮັບໃຊ້ເພິ່ນມາກ່ອນ. ທ່ານລອງຄິດດູວ່າ ເມື່ອທ່ານເຄີຍຮັບໃຊ້ຄົນຜູ້ນັ້ນ ເວລາຕ້ອງການອັນໃດທ່ານກໍຈະໄປຫາຄົນໆນັ້ນ.

## ນຳບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)

7. ໃຫ້ໂອກາດແກ່ນັກຮຽນຄິດລ່ວງໜ້າ ທ່ານເຄີຍໄດ້ຍິນຄຳນີ້ບໍ່? ທ້າທາຍນັກຮຽນໃຫ້ຮັບໃຊ້ຄົນອື່ນ ຮັບໃຊ້ຊຶ່ງກັນແລະກັນໃນຄອບຄົວ ອາດຈະເປັນຜົນດີແກ່ຕົວເຮົາແລະຄອບຄົວດ້ວຍ. ການຮັບໃຊ້ເປັນປັດຈັຍຢ່າງນຶ່ງເພື່ອຝຶກຝົນແນວຄິດຈິດໃຈໃຫ້ຮູ້ຈັກຮັກຄົນອື່ນດ້ວຍ

8. ປິດດ້ວຍການອ້ອນວອນອະທິຖານ ແນໃສ່ຄອບຄົວຝ່າຍໂລກແລະຄອບຄົວຝ່າຍຈິດວິນຍານ ແລະຂອບພຣະຄຸນພຣະເຈົ້າທີ່ພຣະອົງໃຫ້ເຮົາເຂົ້າມາຮັບໃຊ້ຢູ່ໃນຄອບຄົວຂອງພຣະອົງ.

*ບພ*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 4
# ຮັບໃຊ້ເຖິງຈະມີອຸປະສັກ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້**: ເນເຫມີຢາ 6:1-16

**ພູມຫລັງຂອງພຣະຄັມພີ**: ເນເຫມີຢາ 6:1-16

**ຈຸດສຳຄັນສຳລັບບົດຮຽນນີ້:** ການຮັບໃຊ້ຄົນອື່ນຈຳເປັນຕ້ອງມີຄວາມກ້າຫານແລະອົດທົນ.

**ຄຳຖາມເພື່ອການຄົ້ນຄວ້າ**: ເຮັດແນວໃດພວກເຮົາຈຶ່ງຈະບໍ່ຢ້ານແລະໝົດກຳລັງໃຈໃນການຮັບໃຊ້ຄົນອື່ນໄດ້?

**ຈຸດປະສົງຂອງບົດຮຽນນີ້**: ເພື່ອຈະເອົາຄວາມໄວ້ວາງໃຈໃນພຣະເຈົ້າໃນການຮັບໃຊ້ຄົນອື່ນເຖິງຈະມີອຸປະສັກອັນໃດກໍຕາມ.

## ເຂົ້າໃຈພຣະຄັມພີ

ໃນປີ 922 ກ່ອນ ຄສ ຫລັງຈາກກະສັດໂຊໂລໂມນໄດ້ສິ້ນພຣະຊົນ ແຜ່ນດິນໄດ້ແບ່ງອອກເປັນສອງອານາຈັກ ພາກເໜືອເອີ້ນວ່າອິສຣາເອັນ ແລະທາງພາກໃຕ້ເອີ້ນວ່າ ຢູດາ. ອິສຣາເອັນຕົກຢູ່ໃນການປົກຄອງຂອງກະສັດອັດຊີເຣັຽຜູ້ມີຊື່ວ່າ ຊາກອນ II ໃນປີ 722 ກ່ອນ ຄສ. ພວກຢິວຖືກຈັບໄປເປັນຊະເລີຍປະມານ 27,000 ຄົນ. ສ່ວນຢູດາຍັງເປັນເອກກະຣາດຈົນເຖິງ ປີ 587 ກ່ອນ ຄສ ພວກບາບີໂລນໄດ້ມາທຳລາຍກຸງເຢຣູຊາເລັມຈົນກ້ຽງ. ແລະມີຫລາຍຄົນໄດ້ຖືກຈັບໄປເປັນຊະເລີຍໃນກຸງບາບີໂລນເປັນເວລາ 70 ປີ ທີ່ໄດ້ບັນທຶກໄວ້ໃນປຶ້ມຂ່າວຄາວ, ເອເຊກຽນ, ດານີເອນ, ແລະ ເອສເຕີ. ເລີ້ມຈາກ ປີ 538 ກ່ອນ ຄສ ໄດ້ມີກຸ່ມຢິວສີ່ກຸ່ມໃຫຍ່ໄດ້ເລີ້ມກັບຄືນຈາກການເປັນຊະເລີຍ ແລະໄດ້ທວນຄືນໄປສ້າງບ້ານເກີດເມືອງນອນຂອງພວກເຂົາໂດຍການນຳພາຈາກ ເອັຊຣາ, ເນເຫມີຢາ.

ພວກນັກປາດໄດ້ກ່າວເຖິງປຶ້ມ ເອັຊຣາ ແລະ ເນເຫມີຢາ ເປັນນ່ວຍດຽວກັນເພາະພວກເຂົາມີຈຸດປະສົງແລະບອກເຖິງປະວັດໃນເຣື່ອງດຽວອີງຕາມພຣະທັມໃນພາສາເດີມຄືເຮັບເຣີ. ທັງສອງປຶ້ມໄດ້ໄປຄຽງຄູ່ກັນເຖິງເຣື່ອງການກໍ່ສ້າງ ແລະເລີ້ມບູຣະນະປະຕິຮູບສາສນາເຊັ່ນ:

| **ພຣະຄັມພີ** | **ການກໍ່ສ້າງ ຫລືປະຕິຮູບ** |
|---|---|
| ເອັຊຣາ 1-6 | ເລີ້ມສ້າງພຣະວິຫານທີ 2 |
| ເອັຊຣາ 7-10 | ບູຣະນາປະຕິຮູບໃຫ້ບໍຣິສຸດຈາກເອົາເມັຽທີ່ເປັນຄົນຕ່າງຊາດ |
| ເນເຫມີຢາ 1-7 | ກໍ່ສ້າງກຳແພງອ້ອມກຸງເຢຣູຊາເລັມ |
| ເນເຫມີຢາ 8-13 | ປະຕິຮູບຂອງເນເຫມີຢາເຣື່ອງຮັກສາພຣະສັນຍາ |

## ແນະນຳການສອນ

### ແຜນການສອນ-ວິທີສອນນັ້ນອາດສາມາດໃຊ້ແຕກຕ່າງກັນ

1. ບອກວ່າບົດຮຽນວັນນີ້ພວກເຮົາຈະໄດ້ສຶກສາເພື່ອເອົາຊະນະເວລາພົບກັບຜູ້ຕໍ່ຕ້ານ.

2. ເອີ້ນໃຫ້ມີຜູ້ສມັກອ່ານ ເນເຫມີຢາ 6:1-16 ຫລັງຈາກໄດ້ເລືອກເອົາຜູ້ສມັກ ເອົາເຣື່ອງນີ້ມາຫລິ້ນເປັນລະຄອນສັ້ນ. ແບ່ງເປັນກຸ່ມສຸດແລ້ວແຕ່ຈຳນວນລູກຫ້ອງ ສຸດທ້າຍບອກໃຫ້ແຕ່ລະກຸ່ມລາຍງານຂອງກຸ່ມ ທີລະກຸ່ມທີ່ໄດ້ສຶກສາ ແລະຮຽນຮູ້.

3. ເອີ້ນໃຫ້ມີຄົນສມັກອ່ານ ເນເຫມີຢາ 6:1-4 ອອກສຽງດັງ. ໃຫ້ເອົາຄຳຖາມຂ້າງລຸ່ມນີ້ເພື່ອເປັນຈຸດສົນທະນາກັນເຖິງຊີວິດປະຈຳວັນດຽວນີ້ມັນຄືກັນຢ່າງໃດ:
   - ວິທີໃດ ຊານບັນລັດ, ໂຕບີອາ, ແລະ ເກເຊມ ພະຍາຍາມຕໍ່ຕ້ານເນເຫມີຢາ?
   - ເປັນຫຍັງພວກເຂົາຢາກນັດພົບກັບເນເຫາມີຢາເພື່ອເຫດຜົນອັນໃດ?
   - ແມ່ນຫຍັງເຮັດໃຫ້ເນເຫມີຢາເອົາໃຈໃສ່ຕໍ່ພາຣະໃນການກໍ່ສ້າງ?
   - ວິທີໃດເນເຫມີຢາໄດ້ຕອບຕໍ່ ຊານບັນລັດ, ໂຕບີອາ, ແລະເກເຊມ. ໃຫ້ສະມາຊິກຫ້ອງເອົາຕົວຢ່າງມາໃຊ້ໃນສະພາບປັດຈຸບັນໄດ້ແນວໃດ?

4. ເອີ້ນໃຫ້ມີຜູ້ສມັກອ່ານ ເນເຫມີຢາ 6:5-9 ອອກສຽງດັງ. ຮ້ອງໃຫ້ມີຄວາມສມັກອອກຄຳເຫັນໃນບົດນີ້ເຖິງຄົນຜູ້ມັກຕໍ່ຕ້ານ ບອກວ່າພຣະເຈົ້າໄດ້ເຮັດອັນໃດຖ້າມກາງມີການຕໍ່ຕ້ານ?

5. ອ່ານ ເນເຫມີຢາ 6:10-14. ອະທິບາຍເຖິງການເຂົ້າໄປໃນພຣະວິຫານນັ້ນເປັນຄວາມຜິດບາບແນວໃດ? ດ້ວຍວິທີໃດເນເຫມີຢາຈຶ່ງຮູ້ຈັກວ່າການໄປພຣະວິຫານນັ້ນອາດ ເປັນແຜນການຈັບຂອງພວກຕໍ່ຕ້ານ? ກ່າວວ່າ ໃນເມື່ອມີຄົນຊັກຊວນທ່ານໃຫ້ເຮັດຜິດຕໍ່ຄຳສັ່ງຂອງພຣະເຈົ້າ ໃຫ້ຕໍ່ສູ້ຢ່າງແຂງແຮງເໝືອນກັບເນເຫມີຢາ ເພິ່ນລົງມືເຮັດຕາມໜ້າທີ່ ຊຶ່ງເປັນຕົວຢ່າງທີ່ດີຕໍ່ພວກເຮົາ.

*ສບ. ບຸນຈັນ ວົງສຸຣິດທຣ໌*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 5
# ຮັບໃຊ້ເຖິງຈະເປັນທຸກ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້**: ເອຊາຢາ 52:13-15; 53:1-12

**ພູມຫລັງຂອງພຣະຄັມພີ**: ເອຊາຢາ 52-53

**ຈຸດສຳຄັນສຳລັບບົດຮຽນນີ້:** ຮັບໃຊ້ຢ່າງເປັນທຸກ (ພຣະເຢຊູ) ໄດ້ປິ່ນປົວພະຍາດຂອງພວກເຮົາ.

**ຄຳຖາມເພື່ອການຄົ້ນຄວ້າ**: ພວກເຮົາຈະໄດ້ຮຽນອັນໃດຈາກຜູ້ຮັບໃຊ້ທີ່ເປັນທຸກເຊັ່ນນີ້?

**ຈຸດປະສົງຂອງບົດຮຽນນີ້**: ເພື່ອອຸທິດຕົນເປັນຜູ້ຮັບໃຊ້ຢ່າງເປັນທຸກນີ້ ແລະຕັດສິນໃຈຍອມຢູ່ໃຕ້ການນຳພາຂອງພຣະອົງ.

## ເຂົ້າໃຈພຣະຄັມພີ

"ບອກໃຫ້ຮູ້ແດ່ວ່າຜູ້ປະກາດພຣະທັມເວົ້າຢ່າງນີ້ໝາຍເຖິງໃຜ? ເວົ້າເຖິງຕົນເອງຫລືຜູ້ອື່ນ?" (ກິຈການ 8:34). ຕອນນີ້ພຣະຄັມພີແມ່ນການສົນທະນາລະຫວ່າງຄົນເທືອຍຈາກປະເທດເອທີໂອເປັຽທີ່ກຳລັງອ່ານພຣະຄັມພີ ແລະ ຟີລິບໄປຖາມວ່າ ສິ່ງທີ່ຕົນອ່ານນັ້ນທ່ານເຂົ້າໃຈບໍ່? ລາວຕອບວ່າ ບໍ່ເຂົ້າໃຈ ຟີລິບຈຶ່ງມີໂອກາດເປັນພຍານໂດຍກ່າວວ່າ, "ແລະຟີລິບອອກປາກຕັ້ງຕົ້ນເລົ່າພຣະຄັມພີຕອນນັ້ນ ຈຶ່ງປະກາດເຣື່ອງພຣະເຢຊູໃຫ້ທ່ານຟັງ" (8:35).

ພວກເຮົາທີ່ເປັນຄົນເຊື່ອໃນສມັຍນີ້ ເວລາອ່ານພຣະຄັມພີໃໝ່ ພວກເຮົາຮູ້ວ່າອົງພຣະເຢຊູເປັນຜູ້ເຮັດໃຫ້ພຣະຄັມພີເດີມສຳເຣັດ. ແຕ່ຕ້ອງເຂົ້າໃຈວ່າຜູ້ໄດ້ຍິນເຣື່ອງທີ່ຂຽນໄວ້ໃນປຶ້ມເອຊາຢາ ພວກເຂົາບໍ່ໄດ້ເຂົ້າໃຈເຣື່ອງອົງພຣະເຢຊູ ແຕ່ພວກເຂົາເຈົ້າເຂົ້າໃຈເຣື່ອງຜູ້ຮັບໃຊ້ຜູ້ເປັນທຸກທໍຣະມານ. ພວກເຂົາລໍຄອຍພຣະເມຊີອາ ຜູ້ທີ່ຈະມາປົດປ່ອຍເຂົາອອກຈາກການເປັນທາດຂອງຕ່າງຊາດ. ເຫັນວ່າຜູ້ຮັບໃຊ້ຜູ້ເປັນທຸກແລ້ວ ພວກເຂົາຄຶດວ່າອາດບໍ່ແມ່ນຄົນຢ່າງນີ້.

ແຕ່ເຫັນວ່າຜູ້ປະກາດພຣະທັມເອຢຊາໄດ້ເວົ້າເຣື່ອງຜູ້ນຳຢ່າງນັ້ນໃນບົດ 52 ແລະ 53. ພຣະຄັມພີໃໝ່ໄດ້ສະແດງວ່າອົງພຣະເຢຊູເປັນຜູ້ທີ່ເອຊາຢາໄດ້ທຳນວາຍເອົາໄວ້ ແລະໄດ້ກ່າວວ່າ ຖ້າສຶກສາໃຫ້ດີຈະພົບເຫັນຜູ້ຮັບໃຊ້ ທີ່ເອຊາຢາບົດ 52-53 ແມ່ນເວົ້າເຖິງອົງພຣະເຢຊູຄຣິດເຈົ້າ.

ມີພວກນັກປາດໄດ້ເອີ້ນບົດ 52-53 ເປັນ "ເພງຂອງຜູ້ຮັບໃຊ້." ແລະຍັງມີອີກຢູ່ໃນບົດ 42:1-9; 49:1-7; 50:4-11). ບຸກຄລິກລັກສະນະທີ່ກ່າວໃນບົດເພງເຫລົ່ານີ້ໄດ້ໝາຍເຖິງອົງພຣະເຢຊູໄທນາຊາເຣັດ ຄືພຣະອົງເປັນຜູ້ເອົາຄວາມຜິດອອກໄປ ແລະປະທານຄວາມພົ້ນແກ່ຜູ້ທີ່ເຊື່ອທຸກໆຄົນ.

## ແນະນຳການສອນ

### ແຜນການສອນ-ວິທີສອນນັ້ນອາດສາມາດໃຊ້ແຕກຕ່າງກັນ

6. ໃຫ້ຂຽນປະໂຍກທີ່ກ່າວວ່າ, "ສິ່ງທີ່ພວກເຮົາເຮັດ ເພື່ອຄົນອື່ນຈະມີຊີວິດ." ຕັ້ງຄຳຖາມວ່າພວກລູກຫ້ອງເຄີຍເຫັນອົງການໃດ ຫລືຄົນນຶ່ງຄົນໃດໄດ້ໃຊ້ປະໂຍດຢ່າງນັ້ນບໍ່?
   ກ່າວວ່າອາດມີພວກທະຫານ ຕຳຣວດ ພວກດັບເພີງ ແລະຄົນອື່ນຍອມສະລະຊີວິດຂອງພວກເຂົາເພື່ອຄົນອື່ນຈະໄດ້ພົ້ນຈາກອັນຕະລາຍ.

7. ຕັ້ງຄຳຖາມວ່າ ເປັນຫຍັງຄົນເຮົາຈຶ່ງຍອມເສັຽສະລະເພື່ອຊ່ອຍຄົນອື່ນໃຫ້ພົ້ນອັນຕະລາຍ? ຖາມອີກວ່າເປັນດ້ວຍເຫດໃດອົງພຣະເຢຊູໄດ້ສະລະຊີວິດຂອງພຣະອົງເພື່ອຊ່ອຍພວກເຮົາ. ເອີ້ນໃຫ້ມີຜູ້ສມັກແບ່ງປັນປະສົບການໃນຊີວິດຂອງພວກເຂົາໃຫ້ທຸກຄົນຟັງ.

8. ອົງຕາມເພງທີ່ມີຊື່ວ່າ "ເພງຜູ້ຮັບໃຊ້ເອຊາຢາ" ຕັ້ງຄຳຖາມວ່າ ທຸກວັນນີ້ມີເພງນະມັສການອັນໃດທີ່ສະມາຊິກຈື່ໄດ້ຊຶ່ງອອກມາຈາກສິ່ງທີ່ເອຊາຢາໄດ້ປະກາດເຖິງຄວາມເສັຽສະລະອັນຍິ່ງໃຫຍ່ຂອງອົງພຣະເຢຊູຄຣິດເຈົ້າ?

9. ແບ່ງສະມາຊິກເປັນຫລາຍກຸ່ມສຸດແລ້ວແຕ່ຈຳນວນຄົນທີ່ມີໃຫ້ເອົາພຣະຄັມພີຂ້າງລຸ່ມນີ້ມາແຕ່ງເປັນເພງ ຫລືກາບກອນ:
   - ຊັຍຊະນະຕາມນ້ຳພຣະທັຍຂອງພຣະເຈົ້າ (ເອຊາຢາ 52:13-15, 53:1)
   - ຮູບຮ່າງຂອງຜູ້ຮັບໃຊ້ (ເອຊາຢາ 53:2-3)
   - ຜູ້ຮັບໃຊ້ເປັນທຸກແລະຕາຍ (ເອຊາຢາ 53:4-9)
   - ໃນທີ່ສຸດນ້ຳພຣະທັຍຂອງພຣະເຈົ້າກໍມີຊັຍ (ເອຊາຢາ 53:10-12)

10. ບອກໃຫ້ສະມາຊິກໃນຫ້ອງຊອກເອົາຄູ່ຜູ້ເພິ່ງໄດ້ ເພື່ອເຮັດໃຫ້ຄົນອື່ນດີຂຶ້ນຍ້ອນຄວາມເສັຽສະລະຂອງພວກເຂົາໃນອາທິດຈະມາເຖິງນີ້. ບອກໃຫ້ແຕ່ລະຄົນຕິດຕໍ່ຫາກັນຢ່າງໜ້ອຍອາທິດນຶ່ງສອງເທື່ອ ຈະເປັນໂທຣະສັບ, ຈົດໝາຍ, ຫລື ອີແມວ ແລະໃຫ້ບອກສິ່ງທີ່ພວກເຂົາໄດ້ຍອມເສັຽສະລະເພື່ອຄົນອື່ນໄດ້ດີ.

*ສບ. ບຸນຈັນ ວົງສຸຣິດທ໌*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 6
# ເປັນຕົວຢ່າງໃນການຖ່ອມຕົວ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້**: ໂຢຮັນ 13:1-17

**ພູມຫລັງຂອງພຣະຄັມພີ**: ໂຢຮັນ 13:1-17

**ຈຸດສຳຄັນສຳລັບບົດຮຽນນີ້**: ອົງພຣະເຢຊູເປັນຕົວຢ່າງທີ່ດີເຖິງການຖ່ອມຕົວຄືພຣະອົງໄດ້ລ້າງຕີນຂອງພວກສາວົກ.

**ຄຳຖາມເພື່ອການຄົ້ນຄວ້າ**: ມີອັນໃດບໍ່ເຮັດໃຫ້ພວກເຮົາຖ່ອມຕົວເອົາຢ່າງອົງພຣະເຢຊູ?

**ຈຸດປະສົງຂອງບົດຮຽນນີ້**: ເພື່ອສຳຣວດວ່າແມ່ນອັນໃດໃນຊີວິດເຮັດໃຫ້ຂ້າພະເຈົ້າບໍ່ເອົາຕົວຂອງອົງພຣະເຢຊູໃນການຖ່ອມຕົວ.

## ເຂົ້າໃຈພຣະທັມພີ

ອັຄສາວົກໂຢຮັນເປັນຄົນສຸດທ້າຍໃນການຂຽນເຣື່ອງອົງພຣະເຢຊູ. ຫລາຍປີໄດ້ຜ່ານໄປຫລັງຈາກອົງພຣະເຢຊູໄດ້ຂຶ້ນໄປສວັນ ແລະພວກຂຽນຂ່າວປະເສີດທັງສີ່ໄດ້ຈົດໄວ້ເຖິງເຣື່ອງອົງພຣະເຢຊູ. ໂຢຮັນເປັນຄົນລໍຄອຍນານກ່ອນໝູ່ກ່ອນຈະໄດ້ຈົດຄຳພະຍານທີ່ຕົນໄດ້ເຫັນອົງພຣະເຢຊູ. ແນວໃດກໍຕາມ ໂຢຮັນເປັນຄົນມັກລະອຽດ ຈຶ່ງເຮັດໃຫ້ຄົນມັກອ່ານ ພາກທີນຶ່ງໄດ້ກ່າວເຖິງເຣື່ອງອັສຈັນທີ່ອົງພຣະເຢຊູໄດ້ກະທຳ ແລະສິ່ງທີ່ພຣະອົງກ່າວເໝືອນກັນ. ການອັສຈັນ ແລະຄຳເວົ້າຂອງອົງພຣະເຢຊູໄດ້ບອກວ່າພຣະອົງຊົງເປັນພຣະບຸດຂອງພຣະເຈົ້າ. ແຕ່ພວກຫົວໜ້າສາສນາໃນສມັຍຂອງພຣະເຢຊູນັ້ນບໍ່ມີຫລາຍຄົນຮັບເອົາ ສ່ວນຜູ້ທີ່ເຊື່ອໃນອົງພຣະເຢຊູກໍຢ້ານຖືກໄລ່ອອກຈາກທັມມະສາລາ.

ພາກທີສອງຂອງປຶ້ມຂ່າວປະເສີດໂຢຮັນ ຜູ້ຂຽນໄດ້ກ່າວເຖິງການທີ່ອົງພຣະເຢຊູໄດ້ປະຕິບັດຕໍ່ພວກສາວົກ. ໂຢຮັນໄດ້ເວົ້າເຖິງອົງພຣະເຢຊູຖ່ອມຕົວລົງຍອມເຂົ້າໄປຫາໄມ້ກາງແຂນແລະຍອມຕາຍ, ຖືກຝັງໄວ້, ຄືນພຣະຊົນ, ແລະສະເດັດຄືນໄປຫາພຣະບິດາໃນເມືອງຟ້າສວັນຜູ້ສົ່ງພຣະອົງລົງມາ. ໂຢຮັນໄປບໍ່ໄດ້ເວົ້າລະອຽດຄືນສຸດທ້າຍທີ່ອົງພຣະເຢຊູໄດ້ໃຊ້ກັບພວກສາວົກເໝືອນມັດທາຍ, ມາຣະໂກ, ແລະລູກາ ໄດ້ບອກເຖິງສິ່ງທີ່ພຣະເຢຊູໄດ້ສອນໃນຫ້ອງຊັ້ນເທິງເຖິງສິນມະຫາສນິດ ຊຶ່ງເປັນອາຫານຄາບສຸດທ້າຍ.

ໂຢຮັນບໍ່ເວົ້າເຣື່ອງປັສຄາ ຫລືສິນມະຫາສນິດ ແຕ່ໄດ້ເລົ່າເຣື່ອງມັດທາຍ, ມາຣະໂກ, ແລະລູກາບໍ່ເວົ້າ: ຄືການລ້າງຕີນພວກສາວົກ. ພຣະອົງເອົາອ່າງນ້ຳ, ໂຖນ້ຳ, ແລະຜ້າເຊັດຕົວມາ ສິ່ງເຫລົ່ານີ້ເປັນວຽກງານຂອງພວກຄົນໃຊ້. ເຫັນວ່າໃນຄືນວັນນັ້ນບໍ່ມີຄົນໃຊ້ ເພາະເປັນເວລາສ່ວນຕົວຂອງພວກສາວົກແລະອົງພຣະເຢຊູ. ເມື່ອເຫັນເຄື່ອງໃຊ້ລ້າງຕີນ ພວກສາວົກພາກັນສົນທະນາວ່າໃຜຈະເຮັດໜ້າທີ່ຂອງຄົນໃຊ້? ໃຜຈະຍອມຖ່ອມຕົວລົງລ້າງຕີນຄົນທີ່ນັ່ງຢູ່ຂ້າງໂຕະ?

## ແນະນຳການສອນ

### ແຜນການສອນ-ວິທີສອນນັ້ນອາດສາມາດໃຊ້ແຕກຕ່າງກັນ

11. ຕັ້ງຄຳຖາມວ່າ ມີຜູ້ໃດບໍ່ເຮັດໃຫ້ທ່ານເປັນຄົນຖ່ອມຕົວໃນຊີວິດເພາະໄດ້ເຫັນ ແລະໄດ້ຍິນຄົນນັ້ນ ກ່າວຄຳພະຍານ?

12. ວັນນີ້ພວກເຮົາຈະໄດ້ສຶກສາການຖ່ອມຕົວຂອງອົງພຣະເຢຊູ ແລະມີອັນໃດບໍ່ເຮັດໃຫ້ທ່ານບໍ່ຢາກ ເອົາຕົວຢ່າງຂອງອົງພຣະເຢຊູ?

13. ຂຽນໂຄງຮ່າງຈາກພຣະຄັມພີໃນກະດານເພື່ອຄົ້ນຄວ້າແລະສົນທະນາກັນດັ່ງຕໍ່ໄປນີ້:
ຖ່ອມຕົວ: ຮັບໃຊ້ຢ່າງເສຣີ (ໂຢຮັນ 13:1-5)
ຖ່ອມຕົວ: ແບ່ງປັນຢ່າງເສຣີ (ໂຢຮັນ 13: 6-11)
ຖ່ອມຕົວ: ຕັ້ງມາດຕະຖານຢ່າງເສເຣີ (ໂຢຮັນ 13:12-17)
-ຂໍໃຫ້ມີຄົນສມັກເລົ່າເຣື່ອງທີ່ໄດ້ຮຽນໃນບົດຂ້າງເທິງນີ້ຕາມພາສາແລະຄວາມເຂົ້າໃຈຂອງຕົນເອງຕໍ່ ຄົນອື່ນຟັງ.

14. ຮ້ອງໃຫ້ມີຄົນສມັກອ່ານ ໂຢຮັນ 13:1-5 ອອກສຽງດັງ, ກ່າວວ່າອົງພຣະເຢຊູໄດ້ສະແດງຄວາມຮັກ ຕໍ່ພວກສາວົກ ແລະເຣື່ອງຣາຊອານາຈັກຄືການຖ່ອມຕົວຮັບໃຊ້.

15. ແບ່ງຫ້ອງເປັນສອງກຸ່ມ: ກຸ່ມນຶ່ງອ່ານ ໂຢຮັນ 13:6-11 ແລະກຸ່ມສອງ ອ່ານໂຢຮັນ 13:12-17. ຖາມວ່າໃນພຣະຄັມພີຕອນນີ້ອົງພຣະເຢຊູໄດ້ສອນພວກສາວົກເຖິງເຣື່ອງຫຍັງ?

16. ກ່າວເຖິງເຣື່ອງຄະນະບັບຕິສໄປໃຊ້ສະຖານທີ່ຂອງພວກຄັດໂຕລິກ ວ່າພວກບັບຕິສໄດ້ເຫັນແລະ ຮຽນຫຍັງຈາກສິ່ງພວກເຂົາໄດ້ສັງເກດ?

17. ຄຳສອນຂອງອົງພຣະເຢຊູຕໍ່ພວກສາວົກເຣື່ອງການຖ່ອມຕົວນີ້ໄດ້ສອນຫຍັງແດ່ຕໍ່ພວກເຮົາໃນປັດຈຸ ບັນນີ້ໃຫ້ປະຕິບັດ?

*ສບ. ບຸນຈັນ ວົງສຸຣິດທຣ໌*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 7
# ຮັບໃຊ້ດ້ວຍການເສັຽສະລະ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້**: ໂຢຮັນ 15: 9-17

**ພູມຫລັງຂອງພຣະຄັມພີ**: ໂຢຮັນ 14-15

**ຈຸດສຳຄັນສຳລັບບົດຮຽນນີ້**: ຄວາມຮັກອັນຍິ່ງໃຫຍ່ແມ່ນການສະລະຊີວິດຂອງຕົນເພື່ອມິດສະຫາຍ.

**ຄຳຖາມເພື່ອຄົ້ນຄວ້າ**: ພວກເຮົາຈະຍອມເສັຽສະລະຊີວິດເພື່ອມິດສະຫາຍເຮົາໄດ້ຢ່າງໃດ?

**ຈຸດປະສົງຂອງການສຶກສານີ້**: ເພື່ອຫາໂອກາດທີ່ຈະຮັບໃຊ້ເພື່ອນຂອງຂ້າພະເຈົ້າດ້ວຍການເສັຽສະລະຄືການສະແດງຄວາມຮັກຕໍ່ລາວ.

**ອ່ານລວບ**: ການເສັຽສະລະມີຫລາຍປະເພດ. ການເສັຽສະລະອັນຍິ່ງໃຫຍ່ທີ່ພຣະເຢຊູໄດ້ຊົງກະທຳເພື່ອພວກເຮົາທັງຫລາຍຄືພຣະອົງເອີ້ນພວກເຮົາວ່າພວກເຮົາເປັນມິດສະຫາຍຂອງພຣະອົງ. ທຸກມື້ນີ້, ການເປັນມິດກັບພຣະເຢຊູຍັງຕ້ອງມີການເສັຽສະລະ.

## ແຜນສຳລັບການສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ຂຽນຄວາມໝາຍຂອງຄຳວ່າ "ການເສັຽສະລະ" ໃສ່ກະດານຂ້າງນຶ່ງ: ການທຳລາຍຫລືການຍິນຍອມບາງສິ່ງບາງຢ່າງເພື່ອສິ່ງໃດສິ່ງນຶ່ງຫລືການເສັຽສະລະເພື່ອຜົນປໂຍດຂອງຄົນອື່ນໆ. ຖາມ: ທ່ານຈະມີຫຍັງຕື່ມກັບຄວາມໝາຍນີ້ ຫລືວ່າຄວາມໝາຍນີ້ໄດ້ເວົ້າແຈ່ມແຈ້ງແລ້ວ? ເມື່ອເຮົາຄິດເຖິງຄຳເວົ້າ "ການເສັຍສະລະ" ອີງຕາມພຣະຄັມພີ, ທ່ານຄິດເຖິງຫຍັງ?
2. ເວົ້າວ່າ:ມື້ນີ້ພວກເຮົາຈະສົນທະນາກັນເຣື່ອງຄວາມຮັກທີ່ມີການເສັຽສະລະ ຊຶ່ງຈະໄດ້ເປີດເຜີຍທາດແທ້ຂອງຄວາມເປັນເພື່ອນ. ພວກເຮົາຈະຫາໂອກາດຮຽນຮັບໃຊ້ເພື່ອນຂອງເຮົາດ້ວຍການສະແດງຄວາມຮັກທີ່ເສັຽສະລະ.

### ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

3. ກ່ອນຫ້ອງຮຽນເລີ້ມ, ຂຽນຂໍ້ຄວາມໃສ່ກະດານຫລືໃສ່ເຈັ້ຽແຜ່ນໃຫຍ່ ເພື່ອນຳພາການສຶກສາມື້ນີ້.
   - ການຕິດສນິດເຮັດໃຫ້ມີຄວາມຍິນດີ ( ໂຢຮັນ 15: 9-11)
   - ເປັນເພື່ອນຫລືມິດສະຫາຍ (ໂຢຮັນ 15: 12-15)
   - ເປັນຜົນທີ່ຕັ້ງຢູ່ຖາວອນ(ໂຢຮັນ15: 16-17)

4. ອະທິບາຍແບບສັ້ນ ໂຢຮັນ 15:9-11ແລະປະກອບດ້ວຍ: ເບື້ອງຫລັງຂອງບົດຮຽນຈະໃຊ້ຄວາມເວົ້າສິນທະນາຄວາມຮັກທີ່ການເສັຽສະລະຕໍ່ໝູ່ເພື່ອນ. ບາງຄົນສອນວ່າຖ້າຢາກໃຫ້ພຣະເຈົ້າຮັກ, ພວກເຮົາຕ້ອງຮັກສາພຣະບັນຍັດຂອງພຣະອົງ. "ພຣະບິດາຮັກເຮົາຢ່າງໃດເຮົາກໍຮັກພວກທ່ານຢ່າງນັ້ນຈົ່ງຄົງຢູ່ໃນຄວາມຮັກຂອງເຮົາ ຖ້າພວກທ່ານເຊື່ອຟັງຂໍ້ຄໍາສັ່ງຂອງເຮົາພວກທ່ານກໍຄົງຢູ່ໃນຄວາມຮັກຂອງເຮົາ" (ຢຮ 15:10). ຄວາມງາມເຣື່ອງຄວາມບໍຣິສຸດຂອງພຣະເຈົ້າຄືພຣະອົງຊົງເປັນຄວາມຮັກ. ພຣະອົງບໍ່ຊົງຮັກພວກເຮົາຕາມລະດັບການເຊື່ອຟັງ. ພຣະອົງບໍ່ໄດ້ເອົາໃຫ້ແລ້ວເອົາຄືນ. ພຣະເຢຊູຊົງບອກວິທີທີ່ພວກສາວົກຈະໄດ້ຊົມຊື່ນຍິນດີກັບຄວາມຮັກຂອງພຣະເຈົ້າ ເໝືອນດັ່ງພຣະເຢຊູໄດ້ປະສົບການມາ. ພຣະເຢຊູໄດ້ພົບຄວາມຍິນດີໃນຄວາມຮັກຂອງພຣະເຈົ້າ; ພຣະອົງຕ້ອງການໃຫ້ພວກສາວົກໄດ້ພົບຄວາມຍິນດີນັ້ນ. ມາເຖິງຕອນນີ້, ພວກສາວົກໄດ້ພົບຄວາມຊົມຊື່ນຍິນດີໃນພຣະເຢຊູ. ສາວົກຮູ້ວ່າແມ່ນພຣະອົງຜູ້ທີ່ເຂົາເຈົ້າໄດ້ຍ່າງແລະເວົ້າກັບພຣະອົງ ແລະໄດ້ຮັບປະທານອາຫານເຊົ້າຮ່ວມກັບພຣະອົງ. ພຣະເຢຊູບໍ່ໄດ້ເອົາຄວາມຊົມຊື່ນຍິນດີໜີອອກຈາກພວກສາວົກ. ພວກເຂົາເຈົ້າຈະໄດ້ປະສົບຄວາມຊົມຊື່ນຍິນດີຂອງພຣະອົງຜ່ານການຕິດສນິດໃນຄວາມຮັກນັ້ນ.

**ຖາມ**: ການຄົງຢູ່ ຫລືການສນິດໃນຄວາມຮັກພຣະເຢຊູມີຄວາມໝາຍແນວໃດ?

5. ອ່ານໂຢຮັນ 15:12-15ແຮງໆແລະໃຫ້ນັກຮຽນຕື່ມບ່ອນວ່າງດັ່ງຕໍ່ໄປນີ້:
   - ຄວາມຮັກມະຫາສານທີ່ໄດ້ສະແດງອອກແມ່ນ _______________.(ສະລະຊີວິດ)
   - ບັນຍັດທີ່ສູງສຸດໃນຂໍ້ນີ້ແມ່ນ ____________________________. (ຮັກຄົນອື່ນ)
   - ພຣະເຢຊູບໍ່ພຽງແຕ່ໄດ້ເອີ້ນພວກເຮົາວ່າເປັນຜູ້ຮັບໃຊ້ແຕ່ໄດ້ເອີ້ນພວກເຮົາວ່າເປັນ____________.(ເພື່ອນ)

ເວົ້າວ່າ: ໃນພາສາກຣີກຄໍາວ່າ "ຮັກ" ທີ່ໃຊ້ໃນບົດຮຽນນີ້ແມ່ນ "ອາກາເປ" ໝາຍເຖິງ "ຄວາມຮັກທີ່ມີການກະທໍາພ້ອມ, ບໍ່ແມ່ນຄວາມຮູ້ສຶກຊື່ໆ . "ອາກາເປແມ່ນຄວາມຮັກແບບພຣະເຈົ້າຊຶ່ງມີການເສັຽສະລະແຕ່ບໍ່ມີເງື່ອນໄຂ.

6. ອ່ານ ໂຢຮັນ 15:16-17ແຮງໆ. ແລ້ວຖາມດັ່ງນີ້.
   - ແມ່ນຫຽັງທີ່ສໍາຄັນເມື່ອພຣະເຈົ້າໄດ້ເລືອກເອົາພວກເຮົາແລະພວກເຮົາບໍ່ໄດ້ເລືອກເອົາພຣະອົງ?
   - "ຈົ່ງໄປເກີດຜົນອັນຖາວອນ." ມີຄວາມໝາຍແນວໃດສໍາລັບທ່ານ?
   - ມີຄວາມຈິງແນວໃດໃນຄໍາທີ່ວ່າຖ້າພວກເຮົາຈະທູນຂໍສິ່ງໃດໃນພຣະນາມພຣະເຢຊູ, ພຣະບິດາຈະຊົງປະທານໃຫ້ພວກເຮົາ? ອະທິບາຍຄໍາຕອບຂອງທ່ານ.

## ນໍາພຣະທັມໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)

7. ເວົ້າວ່າ:ອີງຕາມໂຢຮັນ 15, ພ້ອມດ້ວຍພຣະຄໍາຫລາຍໆບ່ອນ, ພຣະເຢຊູໄດ້ປະທານທຸກຢ່າງເພື່ອພວກເຮົາຈະໄດ້ຮູ້ເຖິງຈິດໃຈຂອງພຣະອົງ. "ຈົ່ງມີກິຣິຍາທ່າທີຕໍ່ກັນເໝືອນຢ່າງທີ່ພຣະເຢຊູຄຣິດໄດ້ມີ "(ຟລປ 2: 5) ສິ່ງທີ່ດີທີ່ສຸດກໍຄືພຣະອົງຊົງເປັນເພື່ອນເຮົາ. ພຣະອົງຊົງເລືອກທີ່ຈະເປັນມິດສະຫາຍກັບເຮົາ,ແລະ

ຊົງບອກພວກເຮົາເຖິງວິທີທີ່ຈະເປັນຜູ້ມີຄວາມສໍາພັນກັບພຣະອົງສເມີໄປ ເພາະພຣະເຢຊູຊົງເປັນເພື່ອນຂອງພວກເຮົາ, ເຮົາຈຶ່ງສາມາດຮັກໝູ່ເພື່ອນແລະຄົນອື່ນໆ. ຖ້າບໍ່ມີຄວາມຮັກຂອງພຣະອົງ, ຂ້າພະເຈົ້າຄົງບໍ່ສາມາດເພື່ອແພ່ກັບເພື່ອນຂອງຂ້າພະເຈົ້າຜູ້ຕ້ອງການຄວາມຊ່ວຍເຫລືອໄດ້. ຖ້າບໍ່ມີຄວາມຊົມຊື່ນຍິນດີຂອງພຣະອົງ, ຂ້າພະເຈົ້າຈະເປັນຄົນເສັຽສະລະໜ້ອຍທີ່ສຸດ. ຖ້າບໍ່ມີຄວາມກ້າຫານຂອງພຣະອົງ, ຂ້າພະເຈົ້າກໍບໍ່ກ້າທີ່ຈະເສັຽສະລະສິ່ງໃດໆ ໃນຊີວິດຂອງຂ້າພະເຈົ້າເອງ, ຖ້າເວົ້າເຖິງການສະລະຊີວິດແຫ່ງຄິດບໍ່ເຖິງ.

8. ຖາມແລະສົນທະນາຄໍາຖາມຕໍ່ໄປນີ້:
    - ຂ້າພະເຈົ້າຕ້ອງເຮັດຫຍັງແດ່ເພື່ອເປັນການສະແດງເຖິງການຮັບໃຊ້ແລະການຮັກແບບເສັຽສະລະຕໍ່ໝູ່ເພື່ອນ?
    - ການເສັຽສະລະຊີວິດຂອງທ່ານເພື່ອເພື່ອນໃນໂລກປັດຈຸບັນນີ້ມີຄວາມໝາຍແນວໃດແດ່?
9. ອະທິຖານປິດຕາມພຣະທັມ ໂຢຮັນ 15:9-17: ຂ້າແດ່ພຣະບິດາເຈົ້າຊ່ວຍໃຫ້ພວກຂ້າພະອົງໄດ້ສນິດຢູ່ໃນຄວາມຮັກຂອງພຣະອົງໂດຍການຮັກສາຂອງພຣະອົງ. ໂປດນໍາພາທາງແຫ່ງຄວາມຮັກຂອງພຣະອົງເພື່ອພວກຂ້າພະອົງຈະໄດ້ຮຽນຮັກຄົນອື່ນດັ່ງທີ່ພຣະອົງໄດ້ຊົງຮັກພວກຂ້າພ ຣະອົງ. ຊົງຊ່ວຍພວກຂ້າພຣະອົງໃຫ້ມີຄວາມກ້າຫານ ໃຫ້ມີຄວາມຮັກເພື່ອພວກຂ້າພຣະອົງຈະໄດ້ເສັຽສະລະສິ່ງທີ່ພວກຂ້າພຣະອົງຮັກທີ່ສຸດ. ຂອບພຣະຄຸນພຣະອົງທີ່ເປັນຕົວຢ່າງທີ່ຊົງຮັກແທ້ແລະໄດ້ສະລະຊີວິດຂອງພຣະອົງເພື່ອພວກຂ້າພຣະອົງ. ພວກຂ້າພຣະອົງຂອບຄຸນພຣະອົງທີ່ຊົງເລືອກພວກຂ້າພ ຣະອົງເປັນເພື່ອນແລະນໍາຄົນທັງຫລາຍມາຫາພຣະອົງ. ອາແມນ.

*ສຄ*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 8
# ຮັບໃຊ້ພຣະຄຣິດໂດຍຮັບໃຊ້ຄົນທີ່ຂາດເຂີນ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້**: ມັດທາຍ 25: 31-46

**ພູມຫລັງຂອງພຣະຄັມພີ**: ມັດທາຍ 24--25

**ຈຸດສຳຄັນສຳລັບບົດຮຽນນີ້**: ການຮັບໃຊ້ຄວນເປັນລັກສະນະຂອງຜູ້ຕິດຕາມພຣະຄຣິດ.

**ຄຳຖາມເພື່ອຄົ້ນຄວ້າ**: ຂ້ອຍຈະຮັບໃຊ້ຜູ້ໃດແດ່ ດ້ວຍຄວາມຮັກແລະຄວາມເມດຕາ?

**ຈຸດປະສົງຂອງການສຶກສານີ້**: ເພື່ອຊ່ວຍຄົນທີ່ຂາດເຂີນດ້ວຍຄວາມຮັກແລະຄວາມເມດຕາ.

**ອ່ານລວບ**: ຖ້າຊີວິດຂອງພວກເຮົາໄດ້ຮັບການປ່ຽນແປງເພາະມີພຣະຄຣິດຢູ່ໃນເຮົາ, ການຮັບໃຊ້ດ້ວຍຄວາມຮັກແລະຄວາມເມດຕາຈະເປັນທັມມະຊາດທີ່ປາກົດອອກ.

## ແຜນສຳລັບການສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ເວົ້າເຣື່ອງຄຸນແມ່ເຕຣີສາ (Mother Teresa) ໃຫ້ນັກຮຽນຟັງ ແລະຢ່າລືມສິ່ງທີ່ຄຸນແມ່ໄດ້ເວົ້າວ່າ, "ພຣະເຢຊູຊົງຢູ່ໃນຄົນທີ່ກຳລັງໃຈຈະຂາດ, ຄົນພິການ, ຄົນຂີ້ທູດ, ຄົນເປັ້ຽ, ຄົນກຳພ້າ."
2. ເວົ້າວ່າ: ສິ່ງທີ່ຄຸນແມ່ໄດ້ເຮັດ ເກືອບເທົ່າກັບການສລຸບພຣະທັມໃນມື້ນີ້. ພວກເຮົາໄດ້ເຫັນພຣະເຢຊູໃນສິ່ງທີ່ໄດ້ພົບເຫັນໃນຊີວິດຫລາຍໆຄັ້ງ. ພຣະເຢຊູຊົງເອີ້ນສິ່ງເຫລົ່ານັ້ນວ່າ "ຜູ້ຕ່ຳຕ້ອຍທີ່ສຸດຜູ້ນຶ່ງໃນພວກເຂົາ." ສິ່ງທີ່ພວກເຮົາໄດ້ເຮັດເພື່ອຕອບກັບສະພາບການສາມາດປ່ຽນແປງຄົນອື່ນໆ ແລະຕົວເຮົາເອງ. ບົດຮຽນນີ້ທ້າທາຍພວກເຮົາໃຫ້ຮັບໃຊ້ຄົນອື່ນໆດ້ວຍຄວາມຮັກແລະຄວາມເມດຕາ.

### ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

3. ນຳພານັກຮຽນສົນທະນາໃນຫົວຂໍ້ "ແຍກໄວ້ເບື້ອງຂວາ ແລະເບື້ອງຊ້າຍ" (ມທ 25: 31-33). ຖາມ: ການແຍກແບ້ໄວ້ເບື້ອງຊ້າຍ ແລະແກະໄວ້ເບື້ອງຂວາມີຄວາມໝາຍແຕກຕ່າງກັນແນວໃດ? ການແຍກກັນມີຄວາມສຳຄັນຢ່າງໃດສຳລັບຜູ້ຕິດຕາມພຣະເຢຊູ ແລະຜູ້ບໍ່ຕິດຕາມພຣະອົງ?
4. ນຳພານັກຮຽນສົນທະນາໃນຫົວຂໍ້ "ພຣະເຢຊູໃນຫລາຍຮູບແບບ" (ມທ 25: 35-40). ຖາມ: ພຣະທັມຕອນນີ້ບອກຫຍັງແດ່ເຣື່ອງຄວາມຮັບຜິດຊອບຂອງຜູ້ຕິດຕາມພຣະເຢຊູ? ພຣະຄຳຂອງພຣະເຢຊູໃນຕອນນີ້ຈະປ່ຽນແປງພວກເຮົາແນວໃດ ກ່ຽວກັບການຮັບໃຊ້ຄົນອື່ນໆ?

5. ນຳພານັກຮຽນສົນທະນາໃນຫົວຂໍ້ "ຜູ້ທີ່ພວກເຂົາບໍ່ເປັນ" (ມທ 25: 41-46). ຖາມ: ການຕັດສິນລົງໂທດນີ້ຮ້າຍແຮງເກີນໄປບໍ່? ເປັນຫຍັງສິ່ງນີ້ຄວນເປັນສິ່ງທີ່ຕ້ອງຈົດຈຳ ເວລາພວກເຮົາຮັບໃຊ້ຄົນອື່ນໆ?

## <u>ນຳພຣະທັມໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

6. ເວົ້າວ່າ: ພວກເຮົາມັກແບ່ງຄົນທົ່ວໄປວ່າ "ພົ້ນແລ້ວ" ຫລື "ຫລົງຫາຍ" ຜູ້ມີຄວາມເຊື່ອ ຫລືຜູ້ບໍ່ມີຄວາມເຊື່ອ, ຜູ້ເຊື່ອ ຫລື ຜູ້ບໍ່ເຊື່ອ. ພວກເຮົາເບິ່ງຄວາມແຕກຕ່າງທາງດ້ານ ເຊື້ອຊາດ, ສາສນາ, ຖານະຄອບຄົວ, ເພດນິຍົມ, ຖານະໃນສັງຄົມ, ວຽກງານ, ຄົນພິການ ຫລືຄົນຊະຣາ.ແຕ່ພຣະເຢຊູຈະບໍ່ຊົງໃຊ້ສິ່ງເຫລົ່ານັ້ນໃນວັນຕັດສິນລົງໂທດ; ພຣະອົງຈະແບ່ງແຍກຜູ້ຕິດຕາມພຣະອົງໂດຍຄວາມສັມພັນທີ່ພວກເຂົາມີຕໍ່ພຣະອົງ. ແຕ່ວ່າຄວາມສັມພັນນັ້ນຈະປາກົດໃຫ້ເຫັນໃນການຮັບໃຊ້ຜູ້ທີ່ຂາດເຂີນຂອງພວກເຮົາ. "ຄວາມເຊື່ອກໍຢ່າງດຽວກັນ ຖ້າບໍ່ມີການປະຕິບັດ ກໍຕາຍແລ້ວ" (ຢກບ 2: 17).
7. ຖາມຄຳຖາມຕໍ່ໄປນີ້ ແລະສິ່ງເສີມໃຫ້ສົນທະນາ:
   - ແມ່ນຫຍັງຄືວິທີທີ່ເໝາະສົມໃນການສະແດງຄວາມຮັກແລະຄວາມເມດຕາກັບຄົນທີ່ແຕກຕ່າງກັບຕົວທ່ານ?
   - ເຮັດແນວໃດທ່ານຈຶ່ງຈະຮັບໃຊ້ຄົນອື່ນໆດ້ວຍຄວາມຮັກແລະຄວາມເມດຕາໄດ້?
   - ມີຜູ້ໃດໃນອາທິດນີ້ທີ່ທ່ານສາມາດຈະຮັບໃຊ້ດ້ວຍຄວາມຮັກແລະຄວາມເມດຕາ?
8. ອ້ອນວອນປິດການສຶກສາພຣະທັມ ໂດຍຂໍພຣະເຈົ້າໃຫ້ຊ່ວຍເພື່ອນນັກຮຽນໃຫ້ຮັບໃຊ້ຜູ້ທີ່ຂາດເຂີນຖ້າມກາງພວກເຂົາເຈົ້າດ້ວຍຄວາມຮັກແລະຄວາມເມດຕາ. ຂອບຄຸນພຣະເຈົ້າທີ່ໄດ້ຊ່ວຍທຸກຄົນໃຫ້ໄດ້ມີປະສົບການໃນຄວາມຮັກແລະຄວາມເມດຕາຂອງພຣະອົງ.

*ສຄ*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 9
# ຮັບໃຊ້ຕາມຂອງພຣະຣາຊທານ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້**: 1 ໂກຣິນໂທ12:4-13, 27-31

**ພູມຫລັງຂອງພຣະຄັມພີ**: 1 ໂກຣິນໂທ 12

**ຈຸດສຳຄັນສຳລັບບົດຮຽນນີ້**: ຂອງພຣະຣາຊທານຊຶ່ງມາຈາກພຣະວິນຍານ ໃຫ້ພວກເຮົາຮັບໃຊ້ໃນຄຣິສຕະຈັກຂອງພຣະອົງ.

**ຄຳຖາມເພື່ອຄົ້ນຄວ້າ**: ຂ້າພະເຈົ້າມີຂອງພຣະຣາຊທານແລະຈະຮັບໃຊ້ໃນຄຣິສຕະຈັກໄດ້ຢ່າງໃດ?

**ຈຸດປະສົງຂອງການສຶກສານີ້:** ພິສູດຫລືຢືນຢັນຂອງພຣະຣາຊທານທີ່ມີ ຊຶ່ງຈະໃຊ້ຂອງພຣະຣາຊທານຮັບໃຊ້ໃນຄຣິສຕະຈັກ.

**ອ່ານລວບ**: ພຣະເຈົ້າມີຈຸດປະສົງປະທານຂອງພຣະຣາຊທານໃຫ້ຄຣິສຕຽນໄດ້ໃຊ້ເພື່ອເສີມສ້າງຄຣິສຕະຈັກແລະໄພ່ພົນຂອງພຣະອົງ.

## ແຜນສຳລັບການສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ກ່ອນການເລີ້ມຕົ້ນສອນບົດຮຽນ, ເລືອກເອົາການກິລາ (ຫລືອົງການຈັດຕັ້ງຕ່າງໆ) ທີ່ຕ້ອງການທີມງານ ແລະຂຽນລາຍຊື່ຂອງສະມາຊິກທີມແລະຕຳແໜ່ງ (ວຽກ) ຂຽນໃສ່ກະດານໄວ້. ຫລັງຈາກນັກຮຽນມາເຖິງ, ແນະນຳນັກຮຽນໃຫ້ຊອກຫາຄວາມຮັບຜິດຊອບຂອງແຕ່ລະຄົນໃນທີມເພື່ອຈະເຮັດໃຫ້ທີມນັ້ນໄດ້ຮັບຄວາມສຳເຣັດ. ເວົ້າວ່າ: ພວກເຮົາທຸກໆຄົນມີຄວາມຮັບຜິດຊອບ ແລະມີໜ້າທີ່ເພື່ອຊ່ວຍໃຫ້ພຣະກາຍຂອງພຣະຄຣິດດຳເນີນການໄປໄດ້ດີ.

### ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

2. ກ່ອນເລີ້ມການຮຽນ, ເລືອກເອົາຜູ້ນຶ່ງແລ້ວໃຫ້ຄົ້ນຄວ້າເມືອງເກົ່າແກ່ຊື່ "ໂກຣິນໂທ"ແລະຄຣິສຕະຈັກພຣະສັນຍາໃໝ່ໃນໂກຣິນໂທ, ເນັ້ນເຣື່ອງຂອງພຣະຣາຊທານໃນຄຣິສຕະຈັກເມືອງໂກຣິນໂທ. ຫລັງຈາກຜູ້ກ່ຽວໄດ້ລາຍງານສິ່ງທີ່ລາວໄດ້ຄົ້ນພົບ, ໃຊ້ຫົວຂໍ້ໃຫຍ່ໃນບົດຮຽນ,"ຄຣິສຕະຈັກທີ່ເມືອງໂກຣິນໂທ" ເພື່ອຊ່ວຍການສົນທະນາ. ເວົ້າວ່າ: ຄຣິສຕະຈັກໃນເມືອງໂກຣິນໂທບໍ່ໄດ້ໃຊ້ຊີວິດເຕັມຄວາມສາມາດ; ມີການແບ່ງແຍກຫລາຍປະການແລະຕ້ອງການຄວາມເປັນອັນນຶ່ງອັນດຽວກັນເພື່ອ ຈະນຳຄົນທີ່ຍັງບໍ່ຮູ້ພຣະເຈົ້າໃນເຂດນັ້ນໃຫ້ມາເຖິງພຣະຄຣິດ.
3. ກ່ອນເລີ້ມຫ້ອງຮຽນ, ຂຽນຄຳເວົ້າຕໍ່ໄປນີ້ໃສ່ກະດານໄວ້:

- ຂອງພຣະຣາຊທານ (ຄາຣິສມາ)
- ການຮັບໃຊ້ (ໄດອາໂກເນັຽ)
- ທຳງານ (ອີເນີຈີມາ)

ໃຫ້ຄົນນຶ່ງອ່ານ 1 ໂກຣິນໂທ 12: 4-6.ໃຊ້ເວລາສັ້ນໆອະທິບາຍແຕ່ລະຄຳ;ໝາຍເຫດ: ພວກເຮົາໄດ້ພາສາອັງກິດ ຄາຣິສມາຕິກ, ດີເກີນ, ແລະອີເນີຈີ ຈາກພາສາກຣີກທີ່ເຫັນຢູ່ນີ້. ເວົ້າວ່າ: ພຣະເຈົ້າປະທານຂອງພຣະຣາຊທານແກ່ຜູ້ທີ່ເຊື່ອທຸກຄົນຕາມທີ່ຊອບພຣະທັຍຂອງພຣະອົງ.

ໃຫ້ຜູ້ນຶ່ງອ່ານ 1 ໂກຣິນໂທ 12: 7-11. ໃຫ້ນັກຮຽນຊອກຫາຂອງພຣະຣາຊທານໃນ 12: 7 ແລະອະທິບາຍ ແລະເບິ່ງຂອງພຣະຣາຊທານອື່ນໆໃນ 12: 8-10. ເວົ້າວ່າ: ຍັງມີຂອງພຣະຣາຊທານອີກບາງຢ່າງທີ່ບໍ່ໄດ້ກ່າວເຖິງ. ໂປໂລສອນວ່າຄຣິສຕຽນທຸກຄົນມີຂອງພຣະຣາຊທານຢ່າງໜ້ອຍນຶ່ງຢ່າງ.

ໃຫ້ຜູ້ນຶ່ງອ່ານ 1 ໂກຣິນໂທ 12:12-13, 27-31. ຖາມນັກຮຽນວ່າເປັນຫຍັງໂປໂລໃຊ້ຮູບພາບຂອງຮ່າງກາຍເປັນຕົວຢ່າງ? ໂປໂລເວົ້າເຖິງຫຍັງເວລາທ່ານໃຊ້ຄຳວ່າ " ບັບຕິສະມາ"? ໃຊ້ບົດຮຽນເພື່ອຊ່ວຍການສົນທະນາ.

4. ຂຽນຫລັກການ 4 ຢ່າງກ່ຽວກັບຂອງພຣະຣາຊທານໃສ່ກະດານດັ່ງຕໍ່ໄປນີ້:
   - ຜູ້ເຊື່ອທຸກຄົນມີຂອງພຣະຣາຊທານຢ່າງໜ້ອຍນຶ່ງຢ່າງ. ບໍ່ມີຜູ້ໃດທີ່ຖືກຍົກເວັ້ນ.
   - ບໍ່ມີຜູ້ເຊື່ອຜູ້ໃດທີ່ມີຂອງພຣະຣາຊທານທັງໝົດທຸກໆຢ່າງ.
   - ຜູ້ເຊື່ອມີຂອງພຣະຣາຊທານຕ່າງໆກັນ; ພວກເຮົາແຕ່ລະຄົນກໍບໍ່ຄືກັນ.
   - ຜູ້ເຊື່ອໄດ້ຮັບຂອງພຣະຣາຊທານຕາມທີ່ພຣະວິນຍານຂອງພຣະຄຣິດຊົງປະສົງ. ພຣະເຈົ້າໄດ້ຊົງໃຫ້ຂອງພຣະຣາຊທານຕາມພຣະສະຕິປັນຍາຂອງພຣະອົງ.

   -ໃຫ້ເວລານັກຮຽນເພື່ອສະແດງຄວາມຄິດເຫັນສຳລັບຫລັກ 4 ຢ່າງນີ້.

## <u>ນຳພຣະທັມໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

5. ຖາມ: ທ່ານສາມາດສັງເກດເຫັນຂອງພຣະຣາຊທານຂອງບາງຄົນໃນຄຣິສຕະຈັກບໍ່? ຫລັງຈາກມີສອງຫລືສາມຄົນຕອບແລ້ວ, ພານັກຮຽນເບິ່ງ "ຄຳຖາມ" ໃນພາກສຸດທ້າຍຂອງບົດຮຽນ. ໃຫ້ເວລາ 2-3 ນາທີເພື່ອນັກຮຽນຈະໄດ້ພິຈາຣະນາຄຳຖາມແຕ່ລະຂໍ້ຢ່າງງຽບໆ.
6. ໜູນໃຈນັກຮຽນໃຫ້ໃຊ້ເວລາໃນອາທິດຈະມາເພື່ອຄົ້ນຫາຂອງພຣະຣາຊທານຂອງເຂົາເຈົ້າເອງ;ແລະຊັກຊວນພວກເຂົາເຈົ້າໃຫ້ສັງເກດເບິ່ງຂອງພຣະຣາຊທານຂອງຄົນອື່ນໆ ດ້ວຍ.

*ສຄ*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 10
# ສາສນາທູດແຫ່ງການຄືນດີ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** 2 ໂກຣິນໂທ 5:11-21
**ພູມຫລັງຂອງພຣະຄັມພີ:** 2 ໂກຣິນໂທ 5
**ຈຸດສຳຄັນຂອງບົດຮຽນນີ້:** ບອກໃຫ້ຮູ້ວ່າຜູ້ຮັບໃຊ້ຈະເປັນຄືສາສນາທູດເຣື່ອງການຄືນດີ.
**ຄຳຖາມ ເພື່ອການຄົ້ນຄວ້າ:** ເຮົາຈະເປັນສາສນາທູດຂອງການຄືນດີໄດ້ແນວໃດ?
**ຈຸດປະສົງຂອງບົດຮຽນ:** ເພື່ອບອກໃຫ້ຮູ້ວ່າເຮົາທັງຫລາຍມີໜ້າທີ່ເປັນສາສນາທູດ

## ບົດນຳ.

ບົດຮຽນວັນນີ້ມີສີ່ຫົວຂໍ້ ແລະເນັ້ນໜັກໃຫ້ທຸກຄົນຮັບໜ້າທີ່ເປັນສາສນາທູດໃນຖານະທີ່ຕົນເອງເປັນຜູ້ທີ່ຖືກສ້າງຂຶ້ນໃໝ່ໂດຍພຣະຄຸນທາງຄວາມເຊື່ອ, ການເປັນທູດແມ່ນການໄດ້ຮັບກຽດ ແລະອັນຕະລາຍເຊັ່ນກັນ.

## ແຮງບັນດານໃຈພວກເຮົາ ( 2 ໂກຣິນໂທ 5:11-15).

1. ໂປໂລກະຕຸ້ນຈິດໃຈພວກເຮົາໂດຍກ່າວວ່າ ໃນໂລກນີ້ເຮົາທັງຫລາຍຍ່ອມຈະພົບກັບຄວາມອາລັຍໂອ່ຍຄາງ, ດັ່ງນັ້ນໂປໂລຈຶ່ງເລັງເປົ້າໝາຍໃນຊີວິດທີ່ຈະມາ ຄືຊີວິດໃນຟ້າສວັນ. (ເວົ້າເຖິງເບື້ອງຫລັງ 5:1-2).

2. (ເບິ່ງ 5:9). ແປວ່າ ໂປໂລຈະຢູ່ຫລືຕາຍກໍຕາມ ເພິ່ນກໍຈະພະຍາຍາມໃຫ້ຊີວິດຂອງເພິ່ນເປັນທີ່ພໍພຣະທັຍພຣະເຈົ້າ ຄືການຍອມຮັບໜ້າທີ່ເປັນສາສນາທູດແຫ່ງການຄືນດີໃນຣະຫວ່າງພຣະເຈົ້າແລະມະນຸດ.

3. ( ເບິ່ງ ຂໍ້ 11). ໂປໂລເປັນສາສນາທູດທີ່ຍ້ານຢຳພຣະເຈົ້າ ຈຶ່ງຊັກຊວນຄຣິສຕຽນເມືອງໂກຣິນໂທໃຫ້ມີຄວາມຄິດເຮັດຄືເພິ່ນ, ການເຮັດຄືທ່ານອາຈານໂປໂລນັ້ນ ໂປໂລບອກວ່າບໍ່ຈຳເປັນຕ້ອງບອກໃຫ້ຮູ້ ເພາະຄຣິສຕຽນໂກຣິນໂທເປັນລູກສິດຂອງອາຈານໂປໂລແລະຮູ້ວ່າໂປໂລເປັນຄົນອຸທິດຕົນເພື່ອພຣະຄຣິດ.

## ເປັນຄົນທີ່ສ້າງຂຶ້ນໃໝ່ ( 2 ໂກຣິນໂທ 5:16).

1. ອະທິບາຍ ຄຳວ່າ (ສ້າງຂຶ້ນໃໝ່) ບໍ່ແມ່ນຄືນາຍຊ່າງເອົາຂອງເກົ່າມາດັດແປງ ຫລືທາສີຂອງເກົ່າໃຫ້ເບິ່ງຄືຂອງໃໝ່ ແລະການສ້າງຂຶ້ນໃໝ່ນີ້ບໍ່ແມ່ນສ້າງພາຍນອກ.

2. ຕົວຢ່າງໂປໂລອະທິບາຍວ່າ "*ເຫດສັນນັ້ນ ແຕ່ນີ້ຕໍ່ໄປເຮົາຈະບໍ່ສັງເກດຮູ້ຜູ້ໃດຕາມມາຕຖານຂອງມະນຸດ ເຖິງແມ່ນເມື່ອກ່ອນເຮົາໄດ້ສັງເກດຮູ້ພຣະຄຣິດຕາມມາຕຖານຂອງມະນຸດກໍຕາມ ແຕ່ດຽວນີ້ເຮົາກໍບໍ່ສັງເກດຮູ້ພຣະອົງຢ່າງນັ້ນອີກ* "ແປວ່າເພິ່ນໄດ້ປະຖິ້ມມາຕຖານມະນຸດ ຈຶ່ງເຮັດໃຫ້ເພິ່ນມີຄວາມຄິດຈິດໃຈແບບໃໝ່.

## <u>ສືບຕໍ່ເປັນທູດຂອງການຄືນດີ</u> ( 2 ໂກຣິນໂທ 5:17-19).

1. (ຂໍ້ 17). ຄຣິສຕຽນທີ່ບັງເກີດໃໝ່ຢ່າງແທ້ຈິງນັ້ນຈະກາຍເປັນຄົນໃໝ່ຈາກທາງໃນແລ້ວມີການປ່ຽນແປງພາຍນອກ ເພາະພຣະວິນຍານຂອງພຣະເຈົ້າໄດ້ຊົງປ່ຽນແປງ ແລະຊົງສະຖິດຢູ່ໃນຜູ້ນັ້ນຊີວິດຂອງລາວຈະປ່ຽນຈາກໜ້າມືເປັນຫລັງມື. (ເບິ່ງໂກໂລຊາຍ 2:6-7).

2. (ຂໍ້ 18-19) ພຣະເຈົ້າໄດ້ຊົງຮັບເອົາຜູ້ທີ່ຖືກສ້າງຂຶ້ນໃໝ່ໄວ້ເປັນຂອງພຣະອົງ ແລະຊົງມອບໜ້າທີ່ສົ່ງອອກໄປເປັນທູດເພື່ອບອກຄົນທັງຫລາຍວ່າ ພຣະເຈົ້າຈະຊົງໃຫ້ອະພັຍທຸກຄົນທີ່ຍອມເຊື່ອ.

## <u>ຄຣິສຕຽນ: ກັບໜ້າທີ່ສາສນາທູດ</u> ( 2 ໂກຣິນໂທ 5:20-21).

1. (ຂໍ້ 20) ໂປໂລຮັບໜ້າທີ່ເປັນທູດຂອງພຣະຄຣິດ ແລ້ວຊັກຊວນໃຫ້ຄຣິສຕຽນໂກຣິນໂທຄືນດີກັນກັບພຣະເຈົ້າສັນໃດເຮົາກໍມີໜ້າທີ່ຢ່າງດຽວກັນສັນນັ້ນ. ດັ່ງນັ້ນຈຶ່ງພິຈາຣະນາວ່າ ຫາກເປັນໜ້າທີ່ແລ້ວເຮົາບໍ່ເຮັດຈະເປັນແນວໃດ?

2. ໂດຍຄິດເຖິງໜ້າທີ່ໆເຮົາເຮັດຢູ່ໃນບ່ອນເຮົາເຮັດການຢູ່. <u>ໝາຍເຫດ;</u>ການເປັນທູດມີຄວາມສ່ຽງຫລາຍຈົນເຖິງຂັ້ນຊີວິດກໍເປັນໄດ້, ເພາະວ່າຫາກມີຄົນຕໍ່ຕ້ານ, ຫລືບໍ່ມັກປະເທດນັ້ນ ພວກເຂົາກໍຈະພະຍາຍາມຊອກຫາທາງຂັດຂວາງ ແລະເຮັດອັນຕະລາຍໃຫ້. ການເປັນທູດຂອງພຣະຄຣິດກໍຄືກັນ ຫາກເຂົາບໍ່ມັກຄຣິສຕຽນ ຫລືເປັນກຸ່ມຕໍ່ຕ້ານພຣະຄຣິດ ເຂົາກໍຈະເຮັດອັນຕະລາຍໃຫ້ສາສານາທູດໄດ້.

3. ບອກນັກຮຽນວ່າ ການເປັນທູດຂອງພຣະຄຣິດ ນັບວ່າເປັນກຽດອັນສູງທີ່ພຣະອົງໃຊ້ຄົນຄືພວກເຮົາ ເພາະວ່າທູດມີໜ້າທີ່ສ້າງຄວາມສໍາພັນ, ຄວາມຖືກຕ້ອງປອງດອງໃນຣະຫວ່າງປະເທດທີ່ລາວປະຈໍາການແລະປະເທດຊາດຂອງລາວທີ່ສົ່ງອອກໄປ ແລະລາວຈະຕ້ອງເປັນຄົນສັດຊື່ຕໍ່ປະເທດຊາດຂອງລາວ.

4. (ຂໍ້ 21) ແປວ່າພຣະເຈົ້າໄດ້ໃຫ້ພຣະຄຣິດຜູ້ທີ່ບໍ່ເຄີຍເຮັດຜິດບາບ ແລະບໍ່ມີຄວາມບາບນັ້ນໄດ້ແບກເອົາຄວາມຜິດບາບຂອງເຮົາແລ້ວ, ເມື່ອຄວາມຜິດບາບຂອງເຮົາຕົກໃສ່ພຣະເຢຊູແລ້ວເຮົາທັງຫລາຍກໍກາຍເປັນຜູ້ບໍຣິສຸດໃນສາຍພຣະເນດຂອງພຣະເຈົ້າ ເມື່ອເຮົາເປັນທີ່ຊອບທັຍໃນສາຍພຣະເນດຂອງພຣະເຈົ້າແລ້ວພຣະອົງຈຶ່ງໃຊ້ເຮົາໃຫ້ເປັນທູດຝ່າຍພຣະອົງ.

*ຫວ*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 11
# ຮັບໃຊ້ດ້ວຍໃຈກວ້າງຂວາງ

---

| | |
|---|---|
| **ຂໍ້ພຣະຄັມພີສຳລັບບົດຮຽນນີ້:** | 2 ໂກຣິນໂທ 8:1-15 |
| **ພູມຫລັງຂອງພຣະຄັມພີ:** | 2 ໂກຣິນໂທ 8-9 |
| **ຈຸດສຳຄັນຂອງບົດຮຽນນີ້:** | ໃຫ້ເຮົາເຮັດຢ່າງດຽວກັນຕໍ່ຜູ້ອື່ນດັ່ງທີ່ພຣະເຈົ້າເຮັດກັບເຮົາ. |
| **ຄຳຖາມເພື່ອການຄົ້ນຄວ້າ:** | ຈະເອົາການໃຫ້ຂອງຂ້ອຍເປັນການຮັບໃຊ້ພຣະເຈົ້າແນວໃດ? |
| **ຈຸດປະສົງຂອງບົດຮຽນ:** | ເພື່ອສັນນະສູດການກະທຳຂອງຂ້ອຍຕໍ່ຜູ້ອື່ນ ຄືພຣະເຈົ້າກະທຳກັບຂ້ອຍບໍ່? |

## ບົດນຳ.

ບົດຮຽນວັນນີ້ຈະເວົ້າເຣື່ອງການກຸສົນ (**ທານ**) ເຊິ່ງບໍ່ແມ່ນອັນດຽວກັນກັບການຖວາຍ Offering ແລະບໍ່ແມ່ນ Tithes (ສິບຮິດ ຫລື ນຶ່ງສ່ວນສິບ). ເຮົາຄວນແຍກຄຳເວົ້າໃຫ້ຖືກຕ້ອງເຊັ່ນ 1. ໃຫ້ໂບດເພື່ອວຽກງານຂອງພຣະເຈົ້າແມ່ນ (**ຖວາຍ**) ຈະເປັນນຶ່ງສ່ວນສິບຫລືການຖວາຍທົ່ວໄປຮ້ອງວ່າ (**ຖວາຍ**) ແຕ່ຖ້າຈະໃຫ້ຖືກຕ້ອງຕາມຫລັກພຣະຄັມພີຈະຕ້ອງຖວາຍນຶ່ງສ່ວນສິບ. 2. ການກຸສົນ (**ໃຫ້ທານ**) ແມ່ນການຊ່ອຍເຫລືອຊຶ່ງກັນແລະກັນ, ໃຫ້ທານຄົນຍາກຈົນ, ໃຫ້ຄົນຂໍທານ ຈຶ່ງຮ້ອງວ່າ (**ໃຫ້ທານ**) ແລະການໃຫ້ທານບໍ່ມີກຳໜົດຫລືຈຳນວນຄືການຖວາຍ. <u>ໝາຍເຫດ</u>: ຢ່າເວົ້າວ່າໃຫ້ທານພຣະເຈົ້າ ເພາະພຣະເຈົ້າບໍ່ແມ່ນຄົນຂໍທ່ານ.

## ຄຣິສຕະຈັກທີ່ ມາເກໂດເນັຽ (2 ໂກຣິນໂທ 8:1-5).

1. ການເດີນທາງປະກາດຄັ້ງທີສອງນັ້ນໂປໂລບໍ່ມີແຜນການຈະໄປປະກາດທີ່ຄຣິສຕະຈັກ ມາເກໂດເນັຽ ແຕ່ພຣະເຈົ້າໄດ້ສົ່ງເພິ່ນໄປ. ບອກນັກຮຽນວ່າເຣື່ອງນີ້ໄດ້ຊີ້ໃຫ້ເຫັນວ່າລາງເທື່ອແຜນການເຮົາເປັນແນວນຶ່ງ ແຕ່ພຣະເຈົ້າຊົງປ່ຽນໄປອີກແນວນຶ່ງ. ເປັນຫຍັງພຣະເຈົ້າຈຶ່ງປ່ຽນແຜນການເຮົາ? ຕອບ: ເພາະພຣະອົງຊົງຮູ້ສິ່ງທີ່ຈະເກີດຂຶ້ນ (ອ່ານກິຈການ 16:9-10). ແລ້ວຈຶ່ງມີຄຣິສຕະຈັກເກີດຂຶ້ນທີ່ມາເກໂດເນັຽ.

2. ຈົດໝາຍສບັບທີສອງທີ່ໂປໂລໄດ້ຂຽນໄປຍັງຄຣິສຕະຈັກໃນເມືອງໂກຣິນໂທທີ່ເປັນເມືອງນຶ່ງທີ່ຢູ່ພາກໃຕ້ຂອງແຂວງມາເກໂດເນັຽ. ຂຽນໄປເພື່ອຈະໄດ້ຊັກຊວນແລະຕັກເຕືອນເຂົາໃຫ້ເຂົາໄດ້ໃຫ້ທານເພື່ອການຊ່ອຍເຫລືອຜູ້ອື່ນຕາມແບບຢ່າງຂອງຄຣິສຕຽນດັ່ງທີ່ເຂົາໄດ້ຕັ້ງໃຈໄວ້ແລ້ວວ່າຈະເຮັດດັ່ງນັ້ນ. (ຂໍ້ 1).

3. ໂປໂລຢາກໃຫ້ພີ່ນ້ອງໃນແຂວງມາເກໂດເນັຽເຂົ້າໃຈພຣະຄຸນພຣະເຈົ້າ ວ່າການອຸດົມສົມບູນຂອງເຂົາມາຈາກພຣະເຈົ້າ (ຂໍ້ 2). ຍັງບອກອີກວ່າຄາວທຸກຍາກແລະລຳບາກນັ້ນເຂົາມີໃຈໃສສັດທາໃນການໃຫ້ທານແບບຄຣິສຕຽນຢ່າງໃຈກວ້າງຂວາງ, ເມື່ອຮັ່ງມີແລ້ວຢ່າລືມຕອນທຸກຈົນ ແປວ່າໃຫ້ເຮັດຢ່າງດຽວກັນ.

4. ທີ່ມາຂອງຄວາມສາມາດໃນການໃຫ້ທານຕາມທີ່ຕັ້ງໃຈ ແລະເກີນກວ່າຄວາມຕັ້ງໃຈນັ້ນແມ່ນຍ້ອນຖວາຍຕົວຂອງເຂົາເປັນ (ຂໍ້ 5). ພວກເຮົາເຊັ່ນກັນ ຫາກບໍ່ຖວາຍຕົວ ພວກເຮົາກໍຈະເຮັດບໍ່ໄດ້.

**<u>ປະກອບການກຸສົນໃຫ້ຄົບບໍຣິບູນ</u> (2 ໂກຣິນໂທ 8:6-12).**

1. ໂປໂລໄດ້ປ່ຽນຈາກການເວົ້າເຖິງຄຣິສຕະຈັກມາເກໂດເນັຽ ໄປເວົ້າເຖິງຄຣິສຕະຈັກ ໂກຣິນໂທ ໂດຍໃຫ້ທັງສອງຄຣິສຕະຈັກເຮັດການກຸສົນຢ່າງດຽວກັນ. ດ້ວຍວ່າໄດ້ສົ່ງອັຄສາວົກຕິໂຕໃຫ້ມາເວົ້າເຣື່ອງນີ້ (ຂໍ້ 6). ເພາະມີລາງຄົນໄດ້ຕັ້ງເປົ້າໝາຍໃນການໃຫ້ທານ ແຕ່ບໍ່ໄດ້ເຮັດຕາມເປົ້າໝາຍ.

2. ເລົ່າເຣື່ອງຂອງຊາຍຜູ້ນຶ່ງຂໍໃຫ້ອາຈານອ້ອນວອນໃຫ້ໄດ້ງານ ໃນບົດຮຽນ. ແລ້ວບອກນັກຮຽນວ່າລາວໄດ້ສັນຍາ ແຕ່ບໍ່ໄດ້ເຮັດຕາມສັນຍາ.

3. ນອກຈາກການຕິຕຽນແລ້ວ ໂປໂລຍັງຍ້ອງຍໍຄຣິສຕຽນເມືອງໂກຣິນໂທ ເພາະວ່າບໍ່ແມ່ນທຸກຄົນບໍ່ເຮັດຕາມຄວາມຕັ້ງໃຈ ແຕ່ມີລາງຄົນກໍເຮັດຕາມຄວາມຕັ້ງໃຈ (ຂໍ 10).

4. ແປວ່າການກຸສົນຂອງເຂົານັ້ນຄວນໃຫ້ຕາມທີ່ມີ ຫລືເວົ້າໄດ້ອີກວ່າ ບໍ່ແມ່ນບັງຄັບໃຫ້ເຮັດການກຸສົນເກີນກວ່າທີ່ມີຢູ່. (ຂໍ້ 11-12).

**<u>ທາດແທ້ຂອງການກຸສົນ</u> (2 ໂກຣິນໂທ 8:13–15).**

1. ຄຣິສຕະຈັກມາເກໂດເນັຽ ແລະຄຣິສຕະຈັກໂກຣິນໂທເປັນພາກສ່ວນພຣະກາຍຂອງພຣະຄຣິດດັ່ງນັ້ນທັງສອງຈະຮັບໜ້າທີ່ພາຣະສເມີກັນ, ບໍ່ໃຫ້ຜູ້ໃດໜັກ ຫລືເບົາກວ່າກັນ (ຂໍ້ 13)

2. ຄຣິສຕຽນເມືອງໂກຣິນໂທຫລາຍຄົນເປັນຄົນຮັ່ງມີແລະອຸດົມສົມບູນໄປດ້ວຍເຂົ້າປາອາຫານຈຶ່ງຢາກໃຫ້ເຂົາໃຊ້ຂອງທີ່ເຂົາມີຢູ່ເຮັດການກຸສົນ ເພາະການຮັ່ງມີນັ້ນບໍ່ແນ່ນອນວັນນຶ່ງອາດຈະເປັນຄົນຍາກຈົນໄດ້ ແລະຄົນຍາກຈົນໃນວັນນີ້ອາດຈະເປັນຄົນຮັ່ງມີໃນວັນໜ້າອາດຈະມີຄືກັນ (ຂໍ້ 14).

3. “*ຜູ້ໃດໄດ້ຫລາຍກໍບໍ່ເຫລືອ ແລະຜູ້ທີ່ໄດ້ຫນ້ອຍກໍບໍ່ຂາດເຂີນ*” (ຂໍ້ 15) ແມ່ນໂປໂລໄດ້ກ່າວເຖິງພຣະທັມອົພະຍົບ 16:18 ໃນເຣື່ອງມານາທີ່ຕົກມາຈາກຟ້ານັ້ນພຣະເຈົ້າຊົງສັ່ງວ່າໃຫ້ເກັບເອົາພໍສຳລັບມື້ນຶ່ງແຕ່ມີລາງຄົນເກັບຫລາຍ, ລາງຄົນເກັບໜ້ອຍ ແຕ່ເມື່ອມາສັ່ງເບິ່ງແລ້ວທຸກຄົນກໍໄດ້ສເມີກັນ. ເກັບໄວ້ຫລາຍກໍບູດເນົ່າຖິ້ມໄປລ້າໆ.

*ຫວ*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 12
# ເຫັນຄວາມເຊື່ອໂດຍການປະຕິບັດ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ຢາໂກໂບ 2:14-26
**ພູມຫລັງຂອງພຣະຄັມພີ:** ຢາໂກໂບ 2:14-26
**ຈຸດສຳຄັນຂອງບົດຮຽນນີ້:** ການກະທຳບົ່ງບອກຄວາມເຊື່ອອັນແທ້ຈິງ.
**ຄຳຖາມເພື່ອການຄົ້ນຄວ້າ:** ຂ້ອຍຈະສແດງຄວາມເຊື່ອດ້ວຍການກະທຳແນວໃດ?
**ຈຸດປະສົງຂອງບົດຮຽນ:** ເພື່ອຄວາມເຊື່ອໃນໃຈຈະຕ້ອງມີການກະທຳເປັນການພິສູດ.

## ບົດນຳ.

ຢາໂກໂບຜູ້ບັນທຶກພຣະທັມຢາໂກໂບນີ້ບໍ່ແມ່ນຢາໂກໂບລູກຊາຍຂອງເຊເບດາຍ ແຕ່ແມ່ນຢາໂກໂບລູກຊາຍຂອງອາລະຟາແລະທາດາຍ (ມັດທາຍ 10:3). ຢາໂກໂບເນັ້ນໜັກໃນເຣື່ອງຄວາມເຊື່ອ ເປັນຄືຂັ້ນໄດຂັ້ນທຳອິດທີ່ຈະນຳໄປເຖິງຄວາມຊອບທັມ, ແລະຄວາມເຊື່ອນັ້ນຈະເປັນສາຍກະນວນຈູດໃຫ້ມີການປະຕິບັດ.

**ຄວາມເຊື່ອບໍ່ມີການປະຕິບັດ:** ( ຢາໂກໂບ 2:14-17).

1. ພານັກຮຽນສຶກສາດັ່ງນີ້; ກ່ອນອື່ນເຮົາຈະຕ້ອງເຈົ້າໃຈວ່າ (ຄວາມເຊື່ອ faith) ແມ່ນຫຍັງ? ເປັນຮູບແນວໃດ? ໃຜສາມາດວາດພາບຈິນຕະນາການຄວາມເຊື່ອໄດ້ແດ່? ຫລືເຮົາຈະໃຊ້ ວັຈນານຸກົມຊ່ອຍກະໄດ້. ຄຣູໃຊ້ຄຳແປນີ້ (ເຊື່ອ) ແມ່ນສັດທາ, ຄວາມສັດທາ, ຄວາມເຫລື້ອມໃສ, ຄວາມສັດຊື່ ເຫລົ່ານີ້ເປັນຕົ້ນ ແຕ່ກໍຍັງບໍ່ທັນແຈ້ງຄັກ ຈຶ່ງຢາກເວົ້າວ່າ (ຄວາມເຊື່ອຄືຄວາມຕາຍໃຈໃນສິ່ງທີ່ບໍ່ເຫັນກັບຕາ). ນັ້ນແມ່ນຄວາມເຊື່ອ.

2. ອີງຕາມຂໍ້ 14-15 ຄຣູອາດຈະຂໍອາສາສມັກສອງຄົນ ໃຫ້ຜູ້ນຶ່ງເປັນຜູ້ເຊື່ອ ແຕ່ບໍ່ເຮັດຫຍັງຕາມຄວາມເຊື່ອ ແລະຜູ້ທີ່ສອງເປັນຜູ້ປະຕິບັດຮັບໃຊ້ພຣະເຈົ້າ ແຕ່ບໍ່ເຊື່ອພຣະເຈົ້າ. ແລ້ວໃຫ້ໂອກາດສອງຄົນເວົ້າຂີ້ຄຸຍເຣື່ອງຂອງຕົນເອງຜູ້ລະສາມນາທີ ແລ້ວໃຫ້ນັກຮຽນອອກຄຳເຫັນ. (ຄຣູສລຸບບອກວ່າ ທັງສອງໄຮ້ປໂຍດ ແຕ່ຖ້າຢາກໃຫ້ເປັນປໂຍດທັງສອງຕ້ອງຮ່ວມມືກັນ ຫລື ຜູ້ເຊື່ອຈະຕ້ອງເຮັດ ແລະຜູ້ເຮັດຈຳເປັນຕ້ອງເຊື່ອ ໂດຍຄຣູຈະອ່ານຂໍ້ 16 ໃຫ້ນັກຮຽນທຸກຄົນຟັງ) ຂອບໃຈອາສາທັງສອງ ແລ້ວເຊີນເພິ່ນໄປນັ່ງ.

3. ຄຣູອ່ານຂໍ້ 17 ແລ້ວອະທິບາຍຄຳວ່າ ຕາຍແລ້ວ ໝາຍຄວາມວ່າຄົນຕາຍແລ້ວຈະເຮັດຫຍັງກໍບໍ່ໄດ້, ຄວາມເຊື່ອທີ່ຕາຍກໍເປັນດັ່ງນັ້ນແຫລະ.

**<u>ຄວາມເຊື່ອທີ່ມີການປະຕິບັດ</u>:** (ຢາໂກໂບ 2:18-26).

1. ຂໍ້ 18 ຢາໂກໂບໄດ້ເອົາຄວາມເຊື່ອທີ່ບໍ່ມີການປະຕິບັດ ແລະການປະຕິບັດແຕ່ບໍ່ມີຄວາມເຊື່ອ ແລະຄວາມເຊື່ອທີ່ມີການປະຕິບັດມາສົມທຽບກັນສາມຢ່າງ ສາມາດເບິ່ງເຫັນງ່າຍດັ່ງນີ້;

ກ. ຄວາມເຊື່ອທີ່ບໍ່ມີການປະຕິບັດ.

ຂ. ການປະຕິບັດທີ່ບໍ່ມີຄວາມເຊື່ອ.

ຄ. ຄວາມເຊື່ອ ແລະການປະຕິບັດໄປນຳກັນ. *ຝ່າຍເຮົາຈະສະແດງໃຫ້ເຈົ້າເຫັນຄວາມເຊື່ອຂອງເຮົາດ້ວຍການປະຕິບັດຂອງເຮົານັ້ນ* " (ຂໍ້ 18ຂ). ຝ່າຍເຮົາຈະສະແດງ ແປວ່າຈະເຮັດໃຫ້ເບິ່ງ.

2. ຂໍ້ 21-24 ຢາໂກໂບຍົກຕົວຢ່າງຄວາມເຊື່ອຂອງອັບຣາຮາມ (ຄົນດີ) ເພິ່ນເຊື່ອແລະປະຕິບັດ ຈຶ່ງໄດ້ຊື່ວ່າເປັນຄົນຊອບທັມ, ຄຳວ່າຊອບທັມ ແປວ່າຖືກຕ້ອງຕາມສາຍພຣະເນດ (ສາຍຕາ) ຂອງພຣະເຈົ້າ.

ກ. ຄວາມເຊື່ອທີ່ບໍ່ມີການປະຕິບັດ ອາດຈະຖືກຕ້ອງຕາມສາຍຕາມະນຸດລາງຄົນ.

ຂ. ການປະຕິບັດທີ່ບໍ່ມີຄວາມເຊື່ອ ອາດຈະຖືກຕ້ອງຕາມສາຍຕາມະນຸດຫລາຍຄົນ.

ຄ. ສ່ວນອັບຣາຮາມ ເຊື່ອແລະປະຕິບັດແມ່ນຖືກຕ້ອງຕາມສາຍຕາພຣະເຈົ້າ.

3. ຂໍ້ 25-26 ຢາໂກໂບຍົກຕົວຢ່າງ ຍິງໂສເພນີ ຊື່ ນາງຣາຮາບ (ຄົນຊົ່ວ) ໃນພຣະທັມ ໂຢຊວຍ 2:1-11 ລາວໄດ້ຕ້ອນຮັບແລະຊ່ອຍເຫລືອຜູ້ຮັບໃຊ້ພຣະເຈົ້າ, ລາວໄດ້ຊ່ອຍເພາະລາວເຊື່ອແລະຢຳເກງພຣະເຈົ້າ.

ກ. ນາງຣາຮາບ ເປັນໂສເພນີ ຖືວ່າເປັນຍິງຊົ່ວ.

ຂ. ຜູ້ຮັບໃຊ້ນັກສືບສອງຄົນໄດ້ອາສັຍການຊ່ອຍເຫລືອຂອງລາວຈຶ່ງລອດພົ້ນຈາກການຖືກຈັບ.

ຄ. ຢາໂກໂບບໍ່ໄດ້ເລົ່າເຣື່ອງຂອງນາງຣາຮາບ ດັ່ງນັ້ນຕ້ອງໄປອ່ານ ໂຢຊວຍ 2:1-11 ແລ້ວຈະຮູ້ວ່າ ນາງຣາຮາບຢຳເກງພຣະເຈົ້າ ຈຶ່ງຕ້ອນຮັບແລະຊ່ອຍຂ້າໃຊ້ຂອງພຣະເຈົ້າ.

ງ. ຢາໂກໂບບອກວ່າ ຍິງໂສເພນີຜູ້ນີ້ຖືວ່າເປັນຄົນຊອບທັມ ເພາະລາວປະຕິບັດຄວາມເຊື່ອຂອງລາວໃຫ້ເຫັນຢ່າງຊັດເຈນ.

4. ສລຸບເຣື່ອງຂອງ ອັບຣາຮາມຄົນດີ ແລະນາງຣາຮາບ ຄົນຊົ່ວ, ທັງສອງໄດ້ຊື່ວ່າເປັນຄົນຊອມທັມຍ້ອນການປະຕິບັດຄວາມເຊື່ອ, ແລະບອກນັກຮຽນວ່າ ຄົນດີຫລືໂສເພນີກໍຕາມ ຫາກມີຄວາມເຊື່ອແລະປະຕິບັດຈະກາຍເປັນຄົນຊອບທັມໃນສາຍພຣະເນດພຣະເຈົ້າ, ແລະແຜ່ນດິນສວັນຂອງພຣະເຈົ້າຈະຕ້ອນຮັບແຕ່ຄົນຊອບທັມເທົ່ານັ້ນ.

*ຫວ*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 13
# ລັກສະນະການຮັບໃຊ້

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ຟີລິບປອຍ 2:1-11
**<u>ພູມຫລັງຂອງພຣະຄັມພີ:</u>** ຟີລິບປອຍ 1:27-30; 2:1-11
**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ຮຽນຕາມແບບຢ່າງຄວາມອ່ອນສຸພາບແລ້ວເລີ້ມຮັບໃຊ້.
**<u>ຄຳຖາມເພື່ອການຄົ້ນຄວ້າ:</u>** ຂ້ອຍຈະຮຽນເອົາແບບຢ່າງອ່ອນສຸພາບພຣະເຢຊູແນວໃດ?
**<u>ຈຸດປະສົງຂອງບົດຮຽນ</u>:** ເພື່ອຊ່ອຍໃຫ້ເຂົ້າໃຈຄວາມເມດຕາກະຣຸນນາຂອງພຣະເຢຊູແລ້ວເຮັດຕາມແບບຢ່າງພຣະອົງ.

## <u>ບົດນຳ.</u>

ອາຈານໂປໂລກ່າວວ່າ "*ເຫດສັນນັ້ນຖ້າຜູ້ໃດຢູ່ໃນພຣະຄຣິດ ຜູ້ນັ້ນກໍເປັນຄົນທີ່ຖືກຊົງສ້າງຂຶ້ນໃຫມ່ແລ້ວ ຖານະເກົ່າເຫລົ່ານັ້ນກໍລ່ວງໄປແລ້ວ ເບິ່ງແມ, ກາຍເປັນສິ່ງໃຫມ່ທັງນັ້ນ*" (2ໂກຣິນໂທ 5:17). ມີຄວາມໝາຍວ່າບໍ່ແມ່ນສ້ອມແປງ ຫລືທາສີໃຫ້ເບິ່ງໃໝ່ຂຶ້ນ ຫລືຄົນລາວເຮົາມັກໃຊ້ຄຳວ່າຍ້ອມແມວ, ແຕ່ເຮົາທັງຫລາຍຖືກພຣະເຈົ້າຊົງສ້າງຂຶ້ນໃໝ່ ແລະໃໝ່ທັງໃນແລະນອກ, ແຕ່..ຫາກເຮົາຍັງເປັນຄືຄົນເກົ່າຢູ່ ເຮົາຄວນຖາມຕົນເອງວ່າ (ຂ້ອຍຢູ່ໃນພຣະຄຣິດແທ້ບໍ່? ຫາກຂ້ອຍຢູ່ໃນພຣະຄຣິດແທ້ ເປັນຫຍັງຂ້ອຍຈຶ່ງບໍ່ປະອັນເກົ່າ?). ມາຮອດຕອນນີ້ເຮົາລອງມາສຳຣວດເບິ່ງກິຣິຍາຂອງເຮົາເບິ່ງແນວນີ້;

### <u>ກິຣິຍາຂອງພວກເຮົາ</u> (ຟີລິບປອຍ 2: 1-5).

1. ຍ້ອນກັບຄືນໄປຍັງຟີລິບປອຍບົດ 1 ໂປໂລໄດ້ຂໍໃຫ້ຄຣິສຕຽນເມືອງຟີລິບປອຍມີມາຣະຍາດອັນຈົບງາມໂດຍດຳເນີນຊີວິດປະຈຳວັນໃຫ້ສົມກັບຂ່າວປະເສີດ (1:27). ແຕ່ເຂົາບໍ່ເຂົ້າໃຈວ່າຊີວິດອັນຈົບງາມນັ້ນແປວ່າຫຍັງ? ດ້ວຍເຫດນີ້ໂປໂລຈຶ່ງຕອບເຂົາໃນຟີລິບປອຍ 2: 2-3 (ອ່ານ ຟີລິບປອຍ 2:2-3).

2. ໂປໂລບອກເຂົາວ່າ ຈົ່ງເບິ່ງແບບຢ່າງພຣະເຢຊູວ່າ*ເຈົ້າທັງຫລາຍຈົ່ງມີນ້ຳໃຈຕໍ່ກັນເຫມືອນຢ່າງທີ່ມີໃນພຣະເຢຊູຄຣິດ*" (ຂໍ້ 5). ແປວ່າໃຫ້ຄຣິສຕຽນມີຄວາມຄິດແລະມີນ້ຳໃຈເໝືອນດັ່ງພຣະເຢຊູ, ພຣະອົງມີນ້ຳໃຈຢ່າງໃດຄຣິສຕຽນຄວນເຮັດຢ່າງດຽວກັນໃນໂບດ ແລະນອກໂບດ ຈຶ່ງຈະເປັນລັກສະນະກິຣິຍາຂອງຄຣິສຕຽນ.

### <u>ກິຣິຍາຂອງພຣະຄຣິດ</u> (ຟີລິບປອຍ 2:6-11).

1. ຄຣູເວົ້າເຖິງບັນດາລູກຂອງພຣະເຈົ້າວ່າ ເຮົາຮ້ອງຕົວເອງວ່າເຮົາເປັນລູກນ້ອຍຂອງພຣະເຈົ້າ

ແຕ່ນີ້ເຮົາຮັບເຊື່ອຈົນເຖິງວັນນີ້. ຖາມນັກຮຽນວ່າ ໃນຈຳນວນພວກເຮົາມີໃຜເຊື່ອພຣະເຈົ້າເກີນກວ່າ 30 ປີ? 20 ປີ. 10 ປີ ເດ? ໃຫ້ໂອກາດນັກຮຽນຕອບ ແລ້ວຖາມນັກຮຽນຕໍ່ວ່າ ຫາກທ່ານລ້ຽງລູກ 30 ປີ ຍັງເປັນເດັກນ້ອຍອ່ອນຢູ່ທ່ານຈະຄິດແນວໃດ? ແລ້ວບອກນັກຮຽນວ່າ ພຣະເຈົ້າຂອງເຮົາກໍມີພຣະປະສົງໃຫ້ເຮົາໃຫຍ່ດ້ານຄວາມເຊື່ອ ແລະການປະຕິບັດເຊັ່ນກັນ. ຂຽນຄຳວ່າ From child of God became man of God.

2. ໂປໂລໄດ້ເວົ້າກັບຄຣິສຕຽນຟີລິບປອຍວ່າລັກສະນະຂອງພຣະເຢຊູເປັນດັ່ງນີ້; " *ພຣະອົງຊົງສະພາບຂອງພຣະເຈົ້າ ແຕ່ບໍ່ໄດ້ຊົງຖືວ່າການເທົ່າທຽມກັບພຣະເຈົ້ານັ້ນ ເປັນສິ່ງທີ່ຕ້ອງຍຶດຫວງໄວ້ແຕ່ໄດ້ກັບຊົງຍອມສລະ ແລະຊົງຮັບສະພາບຂ້ອຍຂ້າ ຊົງຖືກຳເນີດເປັນມະນຸດ* " (ຂໍ້ 6-7). ແປວ່າພຣະອົງເປັນພຣະເຈົ້າ ແລະຊົງສະພາບຂອງພຣະເຈົ້າບໍ່ວ່າຈະຢູ່ສວັນ ຫລືເທິງແຜ່ນດິນໂລກພຣະອົງກໍຊົງເປັນພຣະເຈົ້າສເມີ, ແຕ່.. ພຣະອົງຊົງຖ່ອມຕົວລົງເມື່ອມາເກີດເປັນມະນຸດ ພຣະອົງຊົງຖ່ອມຕົວລົງໃນສະພາບມະນຸດທັມດາທົ່ວໄປ. ດັ່ງນັ້ນຄຣິສຕຽນບໍ່ຄວນຖືຕົນເປັນໃຫຍ່ ຫລືເປັນນາຍແຕ່ຢ່າງໃດ?

3. ຖ່ອມລົງແລະໝາກຜົນ

1. ຊົງຢູ່ສວັນ ຊັ້ນຟ້າ ລົງມາເກີດໃນໂລກ ແລະກໍບໍ່ໄດ້ເກີດທີ່ຫໍຜາສາດຣາຊວັງ ແຕ່ໄດ້ເລືອກເກີດໃນຄອກສັດ ແລະນອນໃນຮາງຫຍ້າ (ເບິ່ງລູກາ 2:7).

2. ຊົງເປັນພຣະເຈົ້າ ຜູ້ຊົງຣິດອຳນາດອັນສູງສົ່ງ ແຕ່ໄດ້ລົງມາເກີດເປັນມະນຸດ, "*ເມື່ອຊົງປາກົດພຣະອົງໃນສະພາບມະນຸດແລ້ວ ພຣະອົງກໍຊົງຖ່ອມພຣະອົງລົງ ຍອມເຊື່ອຟັງຈົນເຖິງຄວາມມໍຣະນາ ຄືເຖິງຄວາມມໍຣະນາທີ່ໄມ້ກາງແຂນ*" (ຟີລິບປອຍ 2:8).

3. ພຣະເຢຊູບໍ່ແມ່ນເປັນມະນຸດທຳມະດາຄືພວກເຮົາ ແຕ່ຍັງຮັບສະພາບເປັນຂ້ອຍຂ້າອີກຕ່ຳກວ່າເຮົາເສັຽອີກ. ພຣະອົງຍອມເຊື່ອຟັງພຣະບິດາທຸກປະການ. ນີ້ແຫລະຄືພຣະລັກສະນະຂອງພຣະຄຣິດທີ່ຄຣິສຕຽນທຸກຄົນຈຳຕ້ອງຮຽນເອົາເປັນແບບຢ່າງຂອງພຣະອົງ.

4. ພຣະເຢຊູຊົງຖ່ອມລົງ ແຕ່ພຣະເຈົ້າພັດຍົກພຣະອົງຂຶ້ນ *ເຫດສັນນັ້ນ ພຣະເຈົ້າຈຶ່ງໄດ້ຊົງຍົກພຣະອົງຂຶ້ນເຖິງທີ່ສູງສຸດ ແລະໄດ້ຊົງປະທານພຣະນາມນັ້ນ ຊຶ່ງຢູ່ເຫນືອນາມທັງປວງໃຫ້ແກ່ພຣະອົງ* " (ຂໍ້ 9).

5. ຊົງຖືກຍົກຂຶ້ນເພື່ອວ່າ *ເພື່ອເພາະພຣະນາມນັ້ນທຸກຫົວເຂົ່າໃນສວັນ ເທິງແຜ່ນດິນໂລກ ແລະໃຕ້ພື້ນດິນກໍດີ ຈະໄດ້ຄຸເຂົ່າລົງຂາບພຣະເຢຊູເພື່ອທຸກລີ້ນຈະຍອມຮັບວ່າ "ພຣະເຢຊູຄຣິດຊົງເປັນອົງພຣະຜູ້ເປັນເຈົ້າ" ອັນເປັນການຖວາຍພຣະກຽດແກ່ພຣະບິດາເຈົ້າ* " (ຂໍ້ 10-11).

*ຫວ*